

# ປະຊາຊົນ


ວັນອັງຄານ 7 ພຶດສະພາ 2024
ແຮມ 14 ຄ່ຳເດືອນ 5 ພສ 2566
ປີທີ 73 | ສະບັບທີ 14.466

ສຽງຂອງສູນກາງພັກ ປະຊາຊົນ ປະຕິວັດລາວ
ຖະໜົນກຳແພງເມືອງ ນະຄອນຫຼວງວຽງຈັນ ໂທລະສັບ: 021 336111 ແຟັກ: 021 336113
ຕູ້ ປ.ນ 1110 http://www.pasaxon.org.la E-mail: pasaxonn@yahoo.com

ລາຄາ 4.500 ກີບ


## ພັກ ປປ ລາວ



ເພີ່ມທະວີວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບໃຫ້ເລິກເຊິ່ງ ແລະ ກວ້າງຂວາງ ແຕ່ສູນກາງລົງຮອດທ້ອງຖິ່ນ, ຮາກຖານ ນັບທັງການສຶກສາທົ່ວໄປ, ເຮັດໃຫ້ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ກາຍເປັນສະຕິ ແລະ ຄວາມຮັບຜິດຊອບຂອງທຸກການຈັດຕັ້ງ ແລະ ທຸກຄົນຢ່າງແທ້ຈິງ.

## ວາງສະແດງຮູບພາບລະນຶກວັນໄຊຊະນະບັ້ນຮົບດຽນບຽນຟູ ຄົບຮອບ 70 ປີ



ພິທີເປີດງານວາງສະແດງຮູບພາບລະນຶກວັນໄຊຊະນະບັ້ນຮົບປົດປ່ອຍດຽນບຽນຟູ ຄົບຮອບ 70 ປີ (7/5/1954-7/5/2024) ໄດ້ຈັດຂຶ້ນໃນວັນທີ 6 ພຶດສະພານີ້ ທີ່ຫໍພິພິທະພັນກອງທັບ ໂດຍໃຫ້ກຽດເຂົ້າຮ່ວມຂອງທ່ານນາງ ປານີ ຢາທໍ່ຕູ້ ຮອງປະທານປະເທດແຫ່ງ ສປປ ລາວ, ມີທ່ານ ຫງວຽນ ບ່າຮຸ່ງ ເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ, ມີບັນດາການນຳພັກ-ລັດ,

ຕໍ່ໜ້າ 2

## ສະຫາຍ ເພັດ ພົມພິພັກ ຮັບຕຳແໜ່ງເປັນລັດຖະມົນຕີ ກຜທ (ຜູ້ໃໝ່)

ໃນວັນທີ6ພຶດສະພານີ້, ທີ່ສະໂມສອນກະຊວງແຜນການ ແລະ ການລົງທຶນ (ກຜທ) ໄດ້ມີພິທີມອບ-ຮັບໜ້າທີ່ ເລຂາຄະນະພັກ ລັດຖະມົນຕີ ກຜທ ລະຫວ່າງ ສະຫາຍ ຄຳເຈນ ວົງໂພສີ ກຳມະການສູນກາງພັກ ເລຂາຄະນະພັກ ລັດຖະມົນຕີ ກຜທ (ຜູ້ເກົ່າ) ແລະ ສະຫາຍ ເພັດ ພົມພິພັກ ກຳມະການສູນກາງພັກ ເລຂາຄະນະພັກ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ (ຜູ້ໃໝ່) ໂດຍການເຂົ້າຮ່ວມຂອງ ສະຫາຍ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ ນາຍົກລັດຖະມົນຕີ

ຕໍ່ໜ້າ 9




## ມອບ - ຮັບ ໜ້າທີ່ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້

ພິທີມອບ-ຮັບ ໜ້າທີ່ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ລະຫວ່າງທ່ານ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຜູ້ເກົ່າ ແລະ ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຜູ້ໃໝ່ ໄດ້ຈັດຂຶ້ນໃນວັນທີ 6 ພຶດສະພາ 2024 ທີ່ກະຊວງກະສິກຳ ແລະ ປ່າໄມ້ ໂດຍການໃຫ້ກຽດເຂົ້າຮ່ວມຂອງ ທ່ານ ຄຳພັນ ພົມມະທັດ ກຳມະການກົມການເມືອງສູນກາງພັກ ຄະນະເລຂາທິການສູນກາງພັກ ປະທານກວດກາສູນກາງພັກ ປະທານອົງການກວດກາແຫ່ງລັດ,

ຕໍ່ໜ້າ 2




## ງານມະຫະກຳກິລາມະຫາວິທະຍາໄລລາວ ຄັ້ງທີ II ໄດ້ເປີດຂຶ້ນຢ່າງເປັນທາງການ




ຕໍ່ໜ້າ 2

## ຊຽງຮ່ອນ ປະກາດແຕ່ງຕັ້ງຮອງເຈົ້າເມືອງ

ພິທີປະກາດແຕ່ງຕັ້ງຮອງເຈົ້າເມືອງຊຽງຮ່ອນ ແລະ ແຕ່ງຕັ້ງພະນັກງານຫຼັກແຫຼ່ງຂອງເມືອງ ໄດ້ຈັດຂຶ້ນເມື່ອເມື່ອບໍ່ດົນມານີ້, ທີ່ເມືອງຊຽງຮ່ອນ ແຂວງໄຊຍະບູລີ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານພົງສະຫວັນ ສິດທະວົງ ເຈົ້າແຂວງໄຊຍະບູລີ, ມີບັນດາທ່ານການນຳຂັ້ນແຂວງ, ການນຳຂັ້ນເມືອງ, ພະນັກງານອາວຸດໂສບຳນານ ແລະ ພະນັກງານຫຼັກແຫຼ່ງຂອງເມືອງເຂົ້າຮ່ວມ.

ທ່ານ ສຳລານ ສຸວັນນະໄຊດ ຫົວໜ້າຄະນະຈັດຕັ້ງແຂວງໄຊຍະບູລີ ຜ່ານຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການແຕ່ງຕັ້ງຮອງເຈົ້າເມືອງໆຊຽງຮ່ອນ, ເຈົ້າແຂວງໄຊຍະບູລີ ຕົກລົງແຕ່ງຕັ້ງ ທ່ານ ສົມບູນ ໄຊວຸດ ກຳມະການພັກເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເມືອງຊຽງຮ່ອນ ເປັນຮອງເຈົ້າເມືອງຊຽງຮ່ອນ ແລະ ທ່ານເຈົ້າເມືອງຊຽງຮ່ອນ ຕົກລົງແຕ່ງຕັ້ງທ່ານ ເບີ້ຍ ເກດສີທອງ ຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຂຶ້ນເປັນຫົວໜ້າຫ້ອງການ ກະສິກຳ ແລະປ່າໄມ້ເມືອງຊຽງຮ່ອນ ແລະ ປະກາດແຕ່ງຕັ້ງ ທ່ານ ຄຳແພງ ພົມມະວົງ ຫົວໜ້າໜ່ວຍງານລ້ຽງສັດ ເປັນຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງຊຽງຮ່ອນ.

ຕໍ່ໜ້າ 9

## ເສີມຂະຫຍາຍມູນເຊື້ອ ສາມັກຄີຮ່ວມສຳພັນສູ້ຮົບ ລາວ - ຫວຽດນາມ ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ



ໄຊຊະນະບັ້ນຮົບດຽນບຽນຟູ ມີຄວາມໝາຍປະຫວັດສາດອັນໃຫຍ່ຫຼວງ ໃນພາລະກິດ ຕໍ່ສູ້ປົດປ່ອຍປະເທດຊາດຂອງ 3 ປະເທດອິນດູຈີນ ເວົ້າລວມ, ເວົ້າສະເພາະ ການຮ່ວມສຳພັນສູ້ຮົບ ໃນບັ້ນຮົບດຽນບຽນຟູ ລະຫວ່າງ ສອງປະເທດ ລາວ-ຫວຽດນາມ ໃນພາລະກິດປົດປ່ອຍປະເທດຊາດ ໃນເມື່ອກ່ອນກໍຄື ໃນພາລະກິດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ.

ໃນໂອກາດສະເຫຼີມສະຫຼອງບັ້ນຮົບດຽນບຽນຟູ ຄົບຮອບ 70 ປີ (7/5/1954 - 7/5/ 2024) ທ່ານ ຫງວຽນ ບ່າ ຮຸ່ງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳລາວ ໃຫ້ສຳພາດຕໍ່ສື່ມວນຊົນ ໃນວັນທີ 3 ພຶດສະພາ ຜ່ານມານີ້ວ່າ: ບົດຮຽນປະຫວັດສາດກ່ຽວກັບມູນເຊື້ອມິດຕະພາບ, ຄວາມສາມັກຄີ ລະຫວ່າງ ປະຊາຊົນສາມປະເທດອິນດູຈີນ. ພິເສດການຮ່ວມສຳພັນສູ້ຮົບ ລະຫວ່າງ ຫວຽດນາມ ແລະ ລາວ ໃນບັ້ນຮົບດຽນບຽນຟູມາເຖິງປັດຈຸບັນ ຍັງມີຄຸນຄ່າດັ່ງເດີມ ແລະ ເພື່ອເສີມຂະຫຍາຍມູນເຊື້ອດັ່ງກ່າວ, ພວກເຮົາຕ້ອງສືບຕໍ່ເສີມຂະຫຍາຍບັນດາບົດຮຽນ,

ຕໍ່ໜ້າ 2

## ບົດນຳ: ຄວາມໝາຍປະຫວັດສາດ ແຫ່ງໄຊຊະນະບັ້ນຮົບດຽນບຽນຟູ

(ເນື່ອງໃນໂອກາດວັນໄຊຊະນະດຽນບຽນຟູ ຄົບຮອບ 70 ປີ, 7/5/1954 - 7/5/2024)

ໄຊຊະນະບັ້ນຮົບດຽນບຽນຟູ ແມ່ນຈຸດສູງສຸດ, ແມ່ນການທົດສອບກຳລັງແຮງຮອບດ້ານ, ດຸເດືອດຊີ້ຂາດທີ່ສຸດ ໃນພາລະກິດຕໍ່ສູ້ກູ້ຊາດ ລະຫວ່າງ ກອງທັບປະຊາຊົນຫວຽດນາມ ກັບພວກລ່າເມືອງຂຶ້ນແບບເກົ່າຜູ້ຮຸກຮານ ແລະ ການແຊກແຊງຊ່ວຍໜູນ ຂອງຈັກກະພັດແບບໃໝ່. ໄຊຊະນະດຽນບຽນຟູ ບໍ່ພຽງແຕ່ແມ່ນການປະກາດເຖິງການປະລາໄຊ ຂອງພວກລ່າເມືອງຂຶ້ນແບບເກົ່າ ຢູ່ຫວຽດນາມ ກໍຄືຢູ່ອິນດູຈີນ, ແຕ່ຍັງເປັນການຕີເອົາຊະນະຈັກກະພັດແບບໃໝ່ ຂອງກອງທັບປະຊາຊົນຫວຽດນາມ. ໄຊຊະນະບັ້ນຮົບດຽນບຽນຟູ ໄດ້ເຮັດໃຫ້ລັດທິລ່າເມືອງຂຶ້ນແບບເກົ່າ ຖືກພັງທະລາຍເປັນເທື່ອທຳອິດ ຢູ່ໃນໂລກ.

ບັນດາໄຊຊະນະອັນຍິ່ງໃຫຍ່ ທົ່ວສະໜາມຮົບ ໃນ 3 ຊາດອິນດູຈີນ ລາວ-ຫວຽດນາມ ແລະ ກຳປູເຈຍ ໄດ້ບັງຄັບໃຫ້ພວກສັດຕູຕົກຢູ່ໃນທ່າຮັບຈົນຕາແຈ ແລະ ນັບມື້ອ່ອນເພຍ. ການຕໍ່ສູ້ຂອງປະຊາຊົນ 3 ຊາດອິນດູຈີນ ຕ້ານພວກລ່າເມືອງຂຶ້ນແບບເກົ່າ, ກຳລັງປະຕິວັດ ຍິ່ງຕີກໍຍິ່ງເຂັ້ມແຂງ ແລະ ຍິ່ງຍາດເອົາທ່າເປັນເຈົ້າການ, ກຳລັງປະກອບອາວຸດ ໄດ້ເຕີບໃຫຍ່ທາງດ້ານຈຳນວນ ແລະ ຄຸນນະພາບ.

ຕໍ່ໜ້າ 4

## 3 ເດືອນຕົ້ນປີນີ້ ສາລະວັນ ເກັບລາຍຮັບເຂົ້າງົບປະມານໄດ້ 75,56 ຕື້ກີບ



ທ່ານ ນາງ ບຸນທະວີ ດວງລາສີ ຮອງເລຂາພັກແຂວງສາລະວັນ ໄດ້ຜ່ານຮ່າງບົດຕີລາຄາການນຳພາຮອບດ້ານຂອງຄະນະບໍລິຫານງານພັກແຂວງ 3 ເດືອນຕົ້ນປີ ແລະ ທິດທາງແຜນການ 9 ເດືອນທ້າຍປີ ຕໍ່ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ຄັ້ງທີ 14 ສະໄໝທີ IX ວ່າ: ໃນ 3 ເດືອນຕົ້ນປີ 2024 ສາລະວັນສາມາດເກັບລາຍຮັບເຂົ້າງົບປະມານ ໄດ້ 75,56 ຕື້ກີບ ເທົ່າກັບ 147,74% ຂອງແຜນການງວດ I ຫຼື ເທົ່າກັບ 36,74%

ຕໍ່ໜ້າ 2

## ຂ່າວ ແລະ ບົດເຫດການເດັ່ນ


1. ໄຟໄໝ້ປ່າ ຢູ່ເມືອງບົວລະພາ ... ໜ້າ 3
2. ຂະບວນການສັກວັກຊີນ ... ໜ້າ 9


**ສືບຕໍ່ປະຕິບັດວາລະແຫ່ງຊາດ ໃຫ້ປະກົດຜົນເປັນຈິງຢ່າງເປັນຮູບປະທຳ**

### ວາງສະແດງ ...

ຄະນະນຳກະຊວງປ້ອງກັນປະເທດເຂົ້າຮ່ວມ.

ທ່ານ ພິນໂຫ ວິງຄຳ ພິມມະກອນ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ກ່າວວ່າ: ສປປ ລາວ ຖືວ່າໄຊຊະນະດຽນບຽນຟູ້ ສຸດທີ່ມີຄວາມສຳຄັນໃນຄວາມສາມັກຄີຮ່ວມສຳພັນສູ້ຮົບລະຫວ່າງລາວ-ຫວຽດນາມ ຮ່ວມຕີສັດຕູໂຕດຽວກັນ ປະສານສົມທົບຊ່ວຍໜູນຊຶ່ງກັນ ແລະ ກັນ ກາຍເປັນສັນຍາລັກອັນໂດດເດັ່ນແຫ່ງນ້ຳໃຈມິດຕະພາບອັນຍິ່ງໃຫຍ່ຄວາມສາມັກຄີພິເສດລະຫວ່າງລາວ-ຫວຽດນາມບົນຈິດໃຈ "ເຂົ້າເມັດຫັກ-ຜັກໃບດຽວ ກໍບິແບ່ງປັນກັນ". ດ້ວຍນ້ຳໃຈສາມັກຄີອັນບໍລິສຸດຜຸດຜ່ອງຂອງປະຊາຊົນ ແລະ ກອງທັບລາວ-ຫວຽດນາມທີ່ແທ້ຈິງ, ສືບຕໍ່ເປັນມູນເຊື້ອປະກອບສ່ວນເຂົ້າໃນໄຊຊະນະອັນເປັນປະຫວັດສາດຂອງສອງຊາດລາວ-ຫວຽດນາມຄື: ບັ້ນຮົບຍຸດທະສາດ "ໂຮ່ຈິມິນ" ປົດປ່ອຍພາຍໃຕ້ຫວຽດນາມ ແລະ ທ້ອນໂຮມປະເທດຊາດເຂົ້າເປັນໜຶ່ງ ໃນລະດູບານໃໝ່ປີ 1975 ແລະ ສ້າງກາລະໂອກາດພັນປີມີ ຄັ້ງໜຶ່ງໃຫ້ການປະຕິວັດລາວ ແລະ ປະຊາຊົນລາວລຸກຮື້ຂຶ້ນຍຶດອຳນາດໄດ້ຢ່າງສົມບູນແບບ " ບົວບໍ່ຊ້ຳ, ນ້ຳບໍ່ຂຸ່ນ"ສະຖາປະນາສາທາລະນາລັດ ປະຊາທິປະໄຕປະຊາຊົນລາວຂຶ້ນໃນປີ 1975.

ທ່ານ ພິນໂຫ ວິງຄຳ ພິມມະກອນ ກ່າວຕື່ມວ່າ: ງານວາງສະແດງຄັ້ງນີ້ ເປັນການທົບທວນຫວນຄືນຜົນງານ-ໄຊຊະນະຂອງປະຊົນຫວຽດນາມອ້າຍນ້ອງ ພາຍໃຕ້ການນຳພາຂອງພັກກອມມູນິດຫວຽດນາມ ອັນມີປະທານ ໂຮ່ຈິມິນ ເປັນຜູ້ກໍ່ຕັ້ງ ແລະ ນຳພາ ຕໍ່ສູ້ເພື່ອເອກະລາດ, ເສລີພາບ ແລະ ຄວາມຜາສຸກຂອງປະຊາຊົນ ເປັນການເສີມຂະຫຍາຍມູນເຊື້ອ ແຫ່ງຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານລະຫວ່າງສອງຊາດ-ສອງກອງທັບລາວ-ຫວຽດນາມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືການກໍ່ສ້າງລະບອບສັງຄົມນິຍົມທີ່ໝັ້ນຄົງ, ເຂັ້ມແຂງ, ເປັນການຮຽນຮູ້ເຖິງວິລະກຳອັນລ້ຳເລີດ, ຄວາມເດັດດ່ຽວໝຽວແໜ້ນ ແລະ ພິລະອາດຫານຂອງກອງທັບ ແລະ ປະຊາຊົນຫວຽດນາມວິລະຊົນອ້າຍນ້ອງໃນພາລະກິດຕໍ່ສູ້ປົດປ່ອຍຊາດດ້ວຍບົດຮຽນ ແລະ ໄຊຊະນະດຽນບຽນຟູ້ ໄດ້ພິສູດໃຫ້ເຫັນສັດຈະທຳຂອງຍຸກສະໄໝທີ່ວ່າ: ຖ້າປະເທດທີ່ຖືກກົດຂີ່ຂົ່ມເຫັງ ແຕ່ມີມານະຈິດຕໍ່ສູ້ກູ້ຊາດທີ່ເດັດດ່ຽວ, ມີແນວທາງທີ່ຖືກຕ້ອງ, ມີຫົວຄິດປະດິດສ້າງ, ຮູ້ວິທີເຕົ້າໂຮມຄວາມສາມັກຄີຕໍ່ສູ້ເພື່ອເອກະລາດຂອງຊາດຈະຕ້ອງໄດ້ຮັບໄຊຊະນະສັດຈະທຳອັນນີ້ໄດ້ຢັ້ງຢືນໃຫ້ພວກເຮົາຮັບຮູ້ມາຮອດທຸກວັນນີ້ ຊຶ່ງຈະເປັນປະໂຫຍດສຳລັບການສຶກສາຮຽນຮູ້ກ່ຽວກັບທີ່ຕັ້ງຍຸດທະສາດ ແລະ ຄວາມໝາຍສຳຄັນຂອງໄຊຊະນະບັ້ນຮົບດຽນບຽນຟູ້ຈະເຮັດໃຫ້ຜູ້ຊົມຮູ້ກ່ຽວກັບເລື່ອງແທ້ຄືນຈິງຈຳນວນໜຶ່ງຊຶ່ງລ້ວນແລ້ວແຕ່ເກີດມາຈາກລັດທິວິລະຊົນປະຕິວັດອັນເປັນໜ້າສັນລະເສີນ, ເຫັນໄດ້ຄວາມເລິກເຊິ່ງຂອງມິດຕະພາບ ແລະ ການພົວພັນສາມັກຄີພິເສດລະຫວ່າງສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ທີ່ໄດ້ຜ່ານການທົດສອບ ແລະ ຫຼໍ່ຫຼອມໃນແປວໄຟຂອງສົງຄາມອັນດຸເດືອດ, ເຕັມໄປດ້ວຍການເສຍສະຫຼະອັນໃຫຍ່ຫຼວງ, ປະທານໂຮ່ຈິມິນໄດ້ຂຽນໄວ້ວ່າ: ໄຊຊະນະດຽນບຽນ ຟູ້ແມ່ນ "ຫຼັກສິລາຄຳອັນໃສແຈ້ງສະຫງ່າງາມ" ໃນປະຫວັດສາດທີ່ໄດ້ບັນທຶກ ແລະ ບົ່ງບອກເຖິງຄາວທີ່ລັດທິລ່າເມືອງຂຶ້ນລົ້ມສະຫຼາຍລົງແລ້ວ ແລະ ໃນຂະນະດຽວກັນນັ້ນກະແສຟອງຂະບວນການຕໍ່ສູ້ປົດປ່ອຍຊາດຂອງບັນດາປະຊາຊາດໃນໂລກກໍນັບມື້ເພີ່ມທະວີຂຶ້ນກ້າວໄປສູ່ໄຊຊະນະຢ່າງສົມບູນ. ນີ້ແມ່ນໄຊຊະນະອັນໃຫຍ່ຫຼວງຂອງປະຊາຊົນພວກເຮົາ, ເປັນໄຊຊະນະລວມຂອງບັນດາປະຊາຊາດທີ່ຖືກກົດຂີ່ຂົ່ມເຫັງທັງໝົດໃນໂລກ. ໄຊຊະນະດຽນບຽນຟູ້ໄດ້ຢຸດຕິການເປັນຫົວເມືອງຂຶ້ນຂອງຈັກກະພັດຮຸກຮານຢ່າງສິ້ນເຊີງຂອງປະເທດຫວຽດນາມ-ລາວ ແລະ ກຳປູເຈຍ ທັງເປັນການເປີດສັງກາດໃໝ່ໃຫ້ຂະບວນການຕໍ່ສູ້ກູ້ຊາດ ແລະ ປົດປ່ອຍຊາດຂອງກອງທັບ ແລະ ປະຊາຊົນລາວຂອງພວກເຮົາ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ ຈາກໄຊຊະນະນີ້ໄປສູ່ໄຊຊະນະໃໝ່ຍິ່ງໃຫຍ່ກວ່າເກົ່າ. (ຂ່າວ-ພາບ: ບຸນອູ້ມ)

### ງານມະຫະກຳ ...

ງານມະຫະກຳກິລາມະຫາ ວິທະຍາໄລລາວ ຄັ້ງທີ II ໄດ້ຈັດຂຶ້ນໃນວັນທີ 5 ພຶດສະພານີ້, ທີ່ສະໂມສອນ ມະຫາວິທະຍາໄລແຫ່ງຊາດ, ໃຫ້ກຽດເຂົ້າຮ່ວມໂດຍທ່ານ ພຸດ ສິມມາລາວົງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ (ສສກ), ມີບັນດາການນຳກະຊວງ, ການນຳແຂວງ, ຄະນະນັກກິລາ ແຕ່ລະພາກສ່ວນລວມເຖິງນັກກິລາ ແລະ ນັກສຶກສາເຂົ້າຮ່ວມ.

ທ່ານ ອຸດົມ ພອນຄຳເພັງ ປະທານຈັດງານມະຫະກຳກິລາມະຫາວິທະຍາໄລລາວ ຄັ້ງທີ II ໄດ້ລາຍງານວ່າ: ການຈັດງານມະຫະກຳກິລາມະຫາວິທະຍາໄລລາວ ເປັນການແຂ່ງຂັນກິລາໃນລະດັບມະຫາວິທະຍາໄລ, ສະຖາບັນການສຶກສາຊັ້ນສູງ ແລະ ວິທະຍາໄລທົ່ວປະເທດຊຶ່ງຈັດຂຶ້ນເປັນຄັ້ງທີ II ໂດຍປະຕິບັດເນື້ອໃນຂອງກອງປະຊຸມໃຫຍ່ອົງຄະນະພັກກະຊວງ ສສກ ຄັ້ງທີ 9 ເປົ້າໝາຍສູ້ຊົນທີ 8 ກໍ່ສ້າງ ແລະ ພັດທະນາບຸກຄະລາກອນການກິລາ-ກາຍະກຳ ໃຫ້ມີຄຸນນະພາບ ແນໃສ່ໃຫ້ພົນລະເມືອງລາວມີສຸຂະພາບແຂງແຮງ ສາມາດສ້າງນັກກິລາແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້. ນອກຈາກນັ້ນ, ກິລາຍັງເປັນເຄື່ອງມືທາງການທູດເຊື່ອມ ຄວາມສຳພັນທີ່ດີ ຊຶ່ງກັນ ແລະ ກັນໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ. ສະນັ້ນ, ງານມະຫະກຳກິລາໃນຄັ້ງນີ້ ໄດ້ຈັດຂຶ້ນຕາມຈຸດປະສົງເປົ້າໝາຍເພື່ອສ້າງການພົວພັນ ແລະ ສ້າງຄວາມສາມັກຄີຮັກແພງລະຫວ່າງບັນດາສະຖາບັນການສຶກສາຊັ້ນສູງ, ອາຊີວະສຶກສາ ວິທະຍາໄລທັງພາກລັດ ແລະ ເອກະຊົນທົ່ວປະເທດ ເພື່ອເປັນການເສີມຂະຫຍາຍວຽກງານກິລາ-ກາຍະກຳເຂົ້າສູ່ຖັນແຖວພະນັກງານຄູ-ອາຈານ, ນັກສຶກສາຢ່າງກວ້າງຂວາງຕໍ່ເນື່ອງ ແລະ ຫັນໄປສູ່ການພັດທະນາກິລາແຕ່ລະປະເພດເຂົ້າສູ່ລະດັບມາດຕະຖານ, ເປັນການຍົກສູງຄຸນນະພາບທາງດ້ານຮ່າງກາຍ ແລະ ຈິດໃຈເຂົ້າໃນການສຶກສາຄົ້ນຄວ້າຮ່ຳຮຽນ ເພື່ອກຽມພ້ອມປະກອບສ່ວນເຂົ້າໃນພາລະກິດການພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ສ້າງໂອກາດໃຫ້ນັກສຶກສາທຸກພາກສ່ວນໄດ້ແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ, ສ້າງນ້ຳໃຈສາມັກຄີຮັກແພງ, ມີລະບຽບວິໄນ ໃນຖັນແຖວຊາວໜຸ່ມນັກສຶກສາ-ປັນຍາຊົນ ຊຶ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ, ເປັນໂອກາດຄັດເລືອກເອົານັກກິລາທີ່ດີເດັ່ນຜູ້ທີ່ມີພອນສະຫວັນເປັນຕົວແທນນັກສຶກສາຂອງບັນດາມະຫາວິທະຍາໄລໃນລາວ ເພື່ອກຽມພ້ອມເຂົ້າຮ່ວມການແຂ່ງຂັນກັບບັນດາສະຖາບັນການສຶກສາຊັ້ນສູງ ໃນງານມະຫະກຳກິລາມະຫາວິທະຍາໄລຂອງບັນດາປະເທດອາຊຽນ ແລະ ມະຫາວິທະຍາໄລຂອງໂລກທັງກຽມຄວາມພ້ອມເພື່ອເປັນເຈົ້າພາບຈັດງານໃນລະດັບພາກພື້ນ ແລະ ສາກົນໃນອະນາຄົດ.

ທ່ານ ອຸດົມ ພອນຄຳເພັງ ກ່າວຕື່ມວ່າ: ການຈັດງານມະຫະກຳຄັ້ງນີ້, ຄະນະຮັບຜິດຊອບໄດ້ຕົກລົງເຫັນດີເອົາ "ເຜິ້ງ" ເປັນສັດນຳໂຊກ, ເປັນສັນຍາລັກໃຫ້ເຫັນເຖິງຄວາມເປັນປຶກແຜ່ນຄວາມສາມັກຄີມີພະລັງ, ຄວາມດຸໝັ່ນພາກພຽນ ແລະ ຄວາມອ່ອນຫວານປຽບເໝືອນກ້ອນກຳລັງຂອງນັກສຶກສາໄວໜຸ່ມສາວທີ່ມີຄວາມອ່ອນນ້ອມຖ່ອມຕົນ, ມີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ ແລະ ມີຄວາມມຸ່ງຫວັງອັນແຮງກ້າໃນການສຶກສາຄົ້ນຄວ້າຮ່ຳຮຽນ ເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ແລະ ເປັນຜູ້ສືບທອດພາລະກິດຂອງຊາດ ດັ່ງຄຳເວົ້າທີ່ວ່າ: "ຄວາມສາມັກຄີຄືພະລັງແຫ່ງຜົນສຳເລັດ" ນັກສຶກສາລາວກ້າວໄປ ປະເທດຊາດຮຸ່ງເຮືອງສີວິໄລ.

ງານແຂ່ງຂັນກິລາມະຫະວິທະຍາໄລຄັ້ງນີ້ ລວມມີ 14 ພາກສ່ວນເຂົ້າຮ່ວມແຂ່ງຂັນ ຈາກ 5 ມະຫາວິທະຍາໄລ 2 ວິທະຍາຄານ 6 ສະຖາບັນ ແລະ 1 ວິທະຍາໄລ, ມີ 11 ປະເພດກິລາຄື: ແລ່ນ ແລະ ລານ, ບານເຕະ (ຊາຍ-ຍິງ), ດອກປີກໄກ່, ເທ ຄວັນໂດ, ປັນຈັກສີລັດ, ບານສົ່ງ (ໃນຮົ່ມ-ຫາດຊາຍ), ບານບ້ວງ, ກະຕໍ້, ຢູໂດ, ອີສະປ໊ອດ ແລະ ເປຕັງປະກອບມີ 146 ລາຍການ ຈະມີການຊີງໄຊເອົາຫຼຽນທັງໝົດ 526 ຫຼຽນ. ໃນນີ້, ມີຫຼຽນຄຳ 146 ຫຼຽນ, ຫຼຽນເງິນ 146 ຫຼຽນ, ຫຼຽນທອງ 234 ຫຼຽນ, ມີຄູຝຶກ ແລະ ນັກກິລາເຂົ້າຮ່ວມທັງໝົດ 1.387 ຄົນ, ຄະນະຮັບຜິດຊອບ, ຄະນະກຳມະການ, ອະນຸກຳມະການ 1.269 ຄົນ, ໃນພິທີທ່ານ ພຸດ ສິມມາລາວົງ ໄດ້ໃຫ້ກຽດກ່າວເປີດງານຢ່າງເປັນທາງການ, ສຳລັບ ການແຂ່ງຂັນເລີ່ມແຕ່ວັນທີ 5 ພຶດສະພາໄປເຖິງວັນທີ 14 ພຶດສະພານີ້ຈຶ່ງຈະສຳເລັດ.

(ຂ່າວ-ພາບ: ບຸນອູ້ມ)

### ມອບ - ຮັບໜ້າທີ່ ...

ມີບັນດາຄະນະປະຈຳພັກກະຊວງ, ຄະນະບໍລິຫານງານພັກ, ຄະນະນຳກະຊວງເຂົ້າຮ່ວມ.

ທ່ານ ເພັດ ພົມພິພັກ ໄດ້ຜ່ານບົດສະຫຼຸບວຽກງານໄລຍະຜ່ານມາວ່າ: ໃນໄລຍະຜ່ານມາໄດ້ນຳພາ-ຊີ້ນຳການຈັດຕັ້ງເຊື່ອມຊຶມແນວທາງ, ມະຕິ, ຄຳສັ່ງ, ເອກະສານທີ່ສຳຄັນຕ່າງໆຂອງພັກ-ຂອງຊາດ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ຢ່າງທົ່ວເຖິງ; ດ້ານວຽກງານວິຊາສະເພາະ ໄດ້ຫັນເອົາມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ມາເປັນແຜນງານຂອງຂະແໜງການ ປະກອບມີ 4 ແຜນງານຄື: ແຜນງານຜະລິດສະບຽງອາຫານ ແລະ ໂພຊະນາການ; ແຜນງານຜະລິດກະສິກຳເປັນສິນຄ້າ; ແຜນງານຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ. ນັບແຕ່ປີ 2021 ມາຮອດປັດຈຸບັນ ມີຜົນງານທີ່ພົ້ນເດັ່ນຄື: ຂະແໜງກະສິກຳ ແລະ ປ່າໄມ້ມີການຂະຫຍາຍຕົວເພີ່ມຂຶ້ນໃນແຕ່ລະປີ ຈາກ 1,2% ໃນປີ 2020 ມາເປັນ 2,5% ໃນປີ 2021; 2,3% ໃນປີ 2022 (ຫຼຸດລົງເນື່ອງຈາກສະພາບໂຄວິດ) ແລະ 3,4% ໃນປີ 2023 ລື່ນຄາດໝາຍທີ່ສະພາຮັບຮອງ 2,5%, ກວມເອົາ 21,4% ຂອງ GDP ໃນປີ 2023; ສຳເລັດການສ້າງ 2 ນະໂຍບາຍແຫ່ງຊາດຄື: ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ແລະ ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັດນ້ຳ; ໄດ້ເຕົ້າໂຮມຄືນ ບັນດາໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ທີ່ໄດ້ມອບໂອນມາຈາກກະຊວງອຸດສາຫະກຳ ແລະ ການຄ້າ, ພ້ອມທັງໄດ້ມີການປັບປຸງ ລະບົບການຜະລິດຂອງໂຮງງານ; ໄດ້ພະຍາຍາມສຸມໃສ່ການເຈລະຈາດ້ານສຸຂະນາໄມພືດ ແລະ ສັດ (SPS) ເພື່ອເປີດຕະຫຼາດກັບປະເທດຄູ່ຄ້າ ຊຶ່ງຈຳນວນລາຍການສິນຄ້າໄດ້ເພີ່ມຂຶ້ນຈາກ 38 ລາຍການ ໃນປີ 2020 ມາເປັນ 64 ລາຍການໃນປີ 2024 (ເພີ່ມຂຶ້ນໃໝ່ 26 ລາຍການ) ແລະ ວຽກງານອື່ນໆ ລວມທັງວຽກງານຈຸດສຸມໃນຕໍ່ໜ້າຕື່ກອີກ.

ທ່ານ ຄຳພັນ ພົມມະທັດ ໄດ້ມີຄຳເຫັນໂອ້ລົມ ຊຶ່ງໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານຂອງຂະແໜງກະສິກຳ ແລະ ປ່າໄມ້ ໃນໄລຍະຜ່ານມາ ຊຶ່ງມີຜົນສຳເລັດຫຼາຍດ້ານ; ພ້ອມທັງສະເໜີໃຫ້ຄະນະພັກກະຊວງກະສິກຳ ແລະ ປ່າໄມ້ ສືບຕໍ່ຮັກສາມູນເຊື້ອສາມັກຄີ ຕິດພັນກັບການພັດທະນາວຽກງານການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃຫ້ມີບາດກ້າວໃໝ່, ເຂັ້ມແຂງ, ເອົາໃຈໃສ່ວຽກງານການດຳເນີນ ກວດກາການຈັດຕັ້ງປະຕິບັດ, ຍົກສູງດ້ານສະມັດຖະພາບການຜະລິດ, ດ້ານແນວພັນ ແລະ ເຕັກນິກວິຊາການ ເພື່ອເຮັດໃຫ້ວຽກງານກະສິກຳ ໄດ້ຮັບການຂະຫຍາຍຕົວເປັນກ້າວໆ.

(ຂ່າວ: ກະຊວງກະສິກຳ ແລະ ປ່າໄມ້)

### 3 ເດືອນ ...

ຂອງແຜນການປີ. ໃນນັ້ນ, ພູດສູນກາງ ປະຕິບັດໄດ້ 33,65 ຕື້ກີບ ເທົ່າກັບ 157,29% ຂອງແຜນການງວດ, ພູດທ້ອງຖິ່ນປະຕິບັດໄດ້ 41,90 ຕື້ກີບ ເທົ່າກັບ 140,87% ຂອງແຜນການງວດ (ມາຮອດວັນທີ 23 ເມສາ 2024 ເກັບລາຍຮັບໄດ້ 89,96 ຕື້ກວ່າກີບ ເທົ່າກັບ 43,74% ຂອງແຜນການປີ).

ດ້ານລາຍຈ່າຍ ປະຕິບັດໄດ້ 97,59 ຕື້ກີບ ເທົ່າກັບ 74,19% ຂອງແຜນການງວດ I ຫຼື ເທົ່າກັບ 24,09% ຂອງແຜນການປີ (ຮອດວັນທີ 23 ເມສາ 2024 ປະຕິບັດໄດ້ 203,21 ຕື້ກີບ), ການເບີກຈ່າຍເງິນເດືອນທັນຕາມກຳນົດເວລາ ແລະ ຖືກຕ້ອງຕາມລະບຽບການເງິນ, ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຄຳສັ່ງເລກທີ 11ນຍ ວ່າ ດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້, ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ບົນຈິດໃຈແນວທາງຊີ້ນຳຂອງປະທານປະເທດ ແລະ ມະຕິເລກທີ 04 ຂອງກົມການ ເມືອງສູນກາງພັກວ່າ ດ້ວຍການສ້າງເສດຖະກິດ ເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່. ການປູກເຂົ້ານາແຊງ ປະຕິບັດໄດ້ 13.787 ໂຕນ ເທົ່າກັບ 98% ຂອງແຜນການ, ທຽບໃສ່ປີຜ່ານມາເພີ່ມຂຶ້ນ 10%, ການປູກພືດເປັນສິນຄ້າ ເຊັ່ນ: ກາເຟ 16.270 ເຮັກຕາ, ຜົນຜະລິດ 27.093 ໂຕນ, ມັນຕົ້ນ 34.795 ເຮັກຕາ, ຜົນຜະລິດ 849.315 ໂຕນ, ເອົາໃຈໃສ່ຄຸ້ມຄອງສິນຄ້າໃນຕະຫຼາດ, ຕິດຕາມການສະໜອງນ້ຳມັນເຊື້ອໄຟປົກກະຕິ.

ໃນ 3 ເດືອນຕົ້ນປີສາມາດສົ່ງອອກ ສິນຄ້າ ໄດ້ທັງໝົດມູນຄ່າ 514,63 ຕື້ກວ່າກີບ, ທຽບໃສ່ແຜນປີ ປະຕິບັດໄດ້ 66,11% ເປັນຕົ້ນ: ກາເຟ, ມັນຕົ້ນແຫ້ງ- ແປ້ງມັນ, ກ້ວຍ, ສາລີອາຫານສັດ, ຢາງພາລາ ແລະ ອື່ນໆ. ນຳເຂົ້າສິນຄ້າ ປະຕິບັດໄດ້ມູນຄ່າ 124,66 ຕື້ກວ່າກີບ ທຽບໃສ່ ແຜນການປີ ປະຕິບັດໄດ້ 65,63%. ນອກນັ້ນໄດ້ເອົາໃຈໃສ່ບູລະນະສ້ອມແປງເສັ້ນທາງໃນຂອບເຂດຄວາມຮັບຜິດຊອບຂອງແຂວງ-ເມືອງ, ຕິດຕາມໂຄງການກໍ່ສ້າງສະໜາມກິລາຂອງແຂວງ ເພື່ອໃຫ້ທ່ວງທັນກັບການເປັນເຈົ້າພາບ ກິລານັກຮຽນມັດທະຍົມທົ່ວປະເທດ ຄັ້ງທີ 7 ໃນເດືອນ ທັນວາ 2024 ນີ້.

ສຳລັບທິດທິດທາງແຜນວຽກຈຸດສຸມ 3 ເດືອນຕໍ່ໜ້າ ຈະສຸມໃສ່ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນ ຂີ້ລັກ, ປຸ້ນຈີ້, ການເກັບກຳອາວຸດເສິກ, ການລົງກໍ່ສ້າງຮາກຖານຂອງ ປກສ ແຂວງຢູ່ເມືອງສາລະວັນ, ສູ້ຊົນເກັບລາຍຮັບເຂົ້າງົບປະມານງວດ II ໃຫ້ໄດ້ຕາມແຜນ ຫຼື ລື່ນແຜນ, ເກັບກ່ຽວເຂົ້ານາແຊງ ແລະ ກະກຽມປູກພືດລະດູຝົນ ການປູກຕົ້ນໄມ້ ແລະ ປ່ອຍປາ, ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າໃຫ້ປົກກະຕິ, ສູ້ຊົນບໍ່ໃຫ້ມີການປະລະການຮຽນ ແລະ ສອບເສັງໃນພາກຮຽນ 2 ຂອງໂຮງຮຽນ ຊັ້ນປະຖົມ, ມັດທະຍົມຕົ້ນ-ປາຍ ໃຫ້ໄດ້ຕາດໝາຍທີ່ວາງໄວ້.

(ຂ່າວ-ພາບ: ທິດລານິໂຄດໂຍທາ)

### ເສີມຂະຫຍາຍ ...

ຈິດໃຈຕ້ອງຕໍ່ສູ້, ເສີມຂະຫຍາຍກຳລັງແຮງຂອງກ້ອນກຳລັງມະຫາສາມັກຄີຊົນຊາດ, ຮ່ວມຈິດຮ່ວມໃຈແກ້ໄຂທຸກຄວາມຫຍຸ້ງຍາກລຳບາກ ເພື່ອຕີຊະນະສັດຕູ, ເສີມຂະຫຍາຍກຳລັງແຮງພາຍໃນ, ຍົກສູງຈິດໃຈເອກະລາດເປັນເຈົ້າຕົນເອງ, ເຂັ້ມແຂງດ້ວຍຕົນເອງ, ຕັດ ສິນໃຈ ຜ່ານຜ່າທຸກຄວາມຫຍຸ້ງ ຍາກລຳບາກ ເພື່ອຍາດເອົາໄຊຊະນະ, ສືບທອດ ແລະ ພັດ ທະນາບົດຮຽນກ່ຽວກັບການເຄົາລົບຄວາມເປັນຈິງ, ກຳແໜ້ນທັດສະນະພຶດຕິກຳຕົວ ຈິງ, ປະດິດສ້າງໃນການກະທຳ ຢ່າງທັນການ ເພື່ອບັນລຸເປົ້າໝາຍສູງສຸດ, ເພີ່ມທະວີຄວາມສາມັກຄີ, ເປີດກວ້າງສາຍພົວ ພັນການຕ່າງປະເທດ, ຍາດແຍ່ງ ການສະໜັບສະໜູນ, ຊ່ວຍເຫຼືອຂອງບັນດາປະເທດອ້າຍນ້ອງ, ເພື່ອນມິດສາກົນ ແລະ ຄຽງບ່າຄຽງໄຫຼ່ຊຶ່ງກັນ ແລະ ກັນ.

ໃນສະເພາະໜ້າ, ສອງປະ ເທດ ຫວຽດນາມ-ລາວ ຄວນສຸມໃສ່ພາລະກິດພັດທະນາຂອງແຕ່ລະປະເທດ, ຕ້ອງຍົກສູງຈິດໃຈຮັກຊາດ, ຈິດໃຈເອກະລາດເປັນເຈົ້າຕົນເອງ, ເຊີດຊູຊົນຊາດ, ເຂັ້ມແຂງດ້ວຍຕົນເອງ, ບໍ່ຍອມຮັບຄວາມທຸກຍາກ ແລະ ຫຼ້າຫຼັງ, ຕັດສິນໃຈ ໃນການຜ່ານຜ່າສິ່ງທ້າທາຍ, ເສີມຂະຫຍາຍຫົວຄິດປະດິດສ້າງ, ກ້າຄິດກ້າເຮັດ, ຍາມໃດກໍສະໜິດຕິດແທດ ລະຫວ່າງທິດສະດີກັບພຶດຕິກຳຕົວຈິງ, ວິໄຈບັນດາການພັດທະນາໃໝ່ສະພາບການຂອງໂລກ ແລະ ພາຍໃນຢ່າງຖືກຕ້ອງ ແລະ ພັດທະນາທິດສະດີ ຢ່າງປະດິດສ້າງ ເພື່ອ ນຳພາພາລະກິດປ່ຽນແປງໃໝ່ ກ້າວເຂົ້າສູ່ໄຊຊະນະ ແລະ ອື່ນໆ.

ສຳລັບສາຍພົວພັນ ຫວຽດ ນາມ-ລາວ ໃຫ້ສືບຕໍ່ນຳພາສາຍພົວພັນດ້ານການເມືອງກ້າວເຂົ້າສູ່ລວງເລິກ, ປະຕິບັດບັນດາຂໍ້ຕົກລົງຂັ້ນສູງເປັນຢ່າງດີ, ພິເສດ ຕ້ອງສືບຕໍ່ປົກປັກຮັກສາ ແລະ ຍົກສູງປະສິດທິຜົນ ບັນດາກົນໄກການຮ່ວມມືລະຫວ່າງການນຳຂັ້ນສູງສອງປະເທດ, ເຊື່ອມຊຶມ ແລະ ຍົກສູງຄວາມຮັບຮູ້ລວມກ່ຽວກັບລະດັບຄວາມສຳຄັນຂອງສາຍພົວພັນພິເສດຫວຽດນາມ-ລາວ ສູ່ທຸກຊັ້ນຄົນ ຂອງສອງປະເທດ. ພ້ອມທັງຍົກລະດັບ ການຮ່ວມມືດ້ານເສດຖະກິດ ຂອງສອງປະເທດ ຜ່ານການເປີດກວ້າງ, ຍົກລະດັບການເຊື່ອມຈອດຄົມມະນາຄົມຕາເວັນອອກ-ຕາເວັນຕົກ, ສ້າງຕັ້ງກົນໄກຮ່ວມມືຢ່າງຄົບຊຸດ, ນະໂຍບາຍພິເສດ, ອຳນວຍຄວາມສະດວກໃຫ້ວິສາຫະກິດຂອງສອງປະ ເທດລົງທຶນ, ແກ້ໄຂຂໍ້ຄົງຄ້າງ ດ້ວຍບັນດາມາດຕະການກ້າວກະໂດດ, ເສີມຂະຫຍາຍບັນດາຮູບແບບການຮ່ວມມືໃໝ່ເພື່ອຍາດແຍ່ງທ່າແຮງບົ່ມຊ້ອນຂອງສອງປະເທດ ແລະ ຍາດແຍ່ງຄວາມບົ່ມຊ້ອນດ້ານທຶນຮອນ, ບົດຮຽນ, ເຕັກໂນໂລຊີຂອງຄູ່ຮ່ວມມື, ຍາດແຍ່ງສິນທິສັນຍາການຄ້າເສລີ ສະບັບຕ່າງໆ ເພື່ອເພີ່ມທະວີປະສິດທິຜົນດ້ານການຄ້າ, ເປີດກວ້າງການຕະຫຼາດ ແລະ ດຶງດູດການລົງທຶນ, ສຸມໃສ່ພັດທະນາແຫຼ່ງຊັບ ພະຍາກອນມະນຸດ ເພື່ອຕອບ ສະໜອງຄວາມຮຽກຮ້ອງຕ້ອງ ການກ່ຽວກັບການພັດທະນາຂອງແຕ່ລະປະເທດ, ພ້ອມທັງປະກອບສ່ວນຮັດແໜ້ນຄວາມຮັກແພງ ສະໜິດຕິດແທດ, ຄວາມສາມັກຄີລະຫວ່າງປະຊາ ຊົນສອງປະເທດ.

ໂອກາດນີ້, ທ່ານ ຫງວຽນ ບ໋າ ຮຸ່ງ ຍັງໄດ້ສະແດງຄວາມເອກອ້າງທະນົງໃຈ ຕໍ່ບັນດາຄວາມມານະພະຍາຍາມ ອັນໃຫຍ່ຫຼວງຂອງຫຼາຍຮຸ່ນຄົນ ໃນການສ້າງສາປະເທດຊາດ, ເພີ່ມພູນຄຸນສ້າງໃຫ້ສາຍພົວພັນ ຫວຽດນາມ-ລາວ ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ, ນຳເອົາ ສາຍພົວພັນນີ້ກາຍເປັນແບບ ຢ່າງ, ບໍລິສຸດຜຸດຜ່ອງ ແລະ ເປັນຮູບແບບອັນໜຶ່ງອັນດຽວໃນໂລກ. ດ້ວຍຄວາມເອົາໃຈໃສ່ຢ່າງສະໜິດຕິດແທດຂອງການນຳຂັ້ນສູງ ຂອງສອງພັກ, ສອງລັດ, ຮ່ວມກັບຄວາມມານະພະຍາຍາມຂອງບັນດາກະຊວງ, ຂະແໜງການ, ບັນດາອົງການ ຈັດຕັ້ງຢູ່ສູນກາງ ແລະ ທ້ອງຖິ່ນ, ບັນດາວິສາຫະກິດ ພວກເຮົາມີພື້ນຖານຢ່າງຄົບຖ້ວນ ເພື່ອຮັກສາຄວາມເຊື່ອໝັ້ນຕໍ່ອະນາຄົດອັນສະຫວ່າງສະໄຫວຂອງແຕ່ລະປະເທດ ກໍຄືສາຍພົວພັນສາມັກຄີແບບພິເສດ ຫວຽດນາມ-ລາວ ຊຽວສິດງົດງາມ, ໝັ້ນຄົງຂະໜົງແກ່ນຕະຫຼອດການລະນານ. (ໂດຍ: ນາງແສງຈັນ)

## ຄະນະຜູ້ແທນຂັ້ນສູງພັກກອມມູນິດຊາວກອມມູນິດຣັດເຊຍ ຢ້ຽມຢາມ ສປປ ລາວ



ເມື່ອບໍ່ດົນມານີ້, ຄະນະຜູ້ແທນຂັ້ນສູງຂອງ ພັກກອມມູນິດຊາວກອມມູນິດຣັດເຊຍ ນຳໂດຍ ສະຫາຍ ມາລິນໂກວິດຈເຊີຣເກ ອາເລັກຊານໂດຼວິດຈ, ປະທານຄະນະບໍລິຫານງານສູນກາງພັກກອມມູນິດຊາວກອມມູນິດຣັດເຊຍ ຮອງປະທານສະພານິຕິບັນຍັດເຂດ Altai ຂອງຣັດເຊຍ ພ້ອມດ້ວຍຄະນະ ໄດ້ມາເຄື່ອນໄຫວຢ້ຽມຢາມ ສປປ ລາວ ຊຶ່ງເປັນການຢ້ຽມຢາມ ຄັ້ງທີ 2 ນັບແຕ່ສອງພັກ ໄດ້ສ້າງຕັ້ງສາຍພົວພັນນຳກັນ.

ໃນໄລຍະຢູ່ຢ້ຽມຢາມ, ຄະນະຜູ້ແທນຂັ້ນສູງຂອງພັກດັ່ງກ່າວ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍທອງສະລິດ ມັງໜໍ່ເມກ ຄະນະເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ ແລະ ພົບປະເຮັດວຽກສອງຝ່າຍກັບຄະນະຜູ້ແທນຝ່າຍລາວ ນຳໂດຍ ສະຫາຍທອງສະຫວັນ ພົມວິຫານ ກຳມະການສູນກາງພັກ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ໃນການພົບປະ, ບັນດາສະຫາຍການນຳຂອງລາວ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມລາວຄັ້ງນີ້ຂອງຄະນະຜູ້ແທນ ຊຶ່ງເປັນການປະກອບສ່ວນຊຸກຍູ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ເປັນມູນເຊື້ອອັນດີງາມລະຫວ່າງ ປະຊາຊົນສອງຊາດລາວ-ຣັດເຊຍ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ພັກ ປປ ລາວ ແລະ ພັກກອມມູນິດຊາວກອມມູນິດຣັດເຊຍ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ. ໃນໂອກາດນີ້, ຝ່າຍລາວ ໄດ້ແຈ້ງໃຫ້ຝ່າຍຣັດເຊຍ ຊາບກ່ຽວກັບ ສະພາບລວມຂອງການພັດທະນາເສດຖະກິດ-ສັງຄົມ ຢູ່ ສປປ ລາວ ໃນໄລຍະຊຸມປີຜ່ານມາ ກໍຄືໃນໄລຍະປັດຈຸບັນ ຊຶ່ງພັກ-ລັດຖະບານລາວ ກຳລັງສຸມທຸກກຳລັງ ໃນການສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແກ້ໄຂບັນຫາເສດຖະກິດ-ການເງິນ, ບັນຫາຢາເສບຕິດ ແລະ ເອົາໃຈໃສ່ກະກຽມໃຫ້ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ທີ່ຈະຈັດຂຶ້ນໃນຕົ້ນປີ 2026; ໄດ້ຍົກໃຫ້ເຫັນເຖິງມູນເຊື້ອການຕໍ່ສູ້ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງ ພັກ ປປ ລາວ ໃນພາລະກິດປົດປ່ອຍຊາດໃນເມື່ອກ່ອນ ແລະ ພ້ອມທັງສະຖາປະນາ ສປປ ລາວ ປີ 1975 ຊຶ່ງຍາມໃດ ພັກ ກໍຍຶດໝັ້ນລັດທິມາກ-ເລນິນ ເປັນພື້ນຖານແນວຄິດທິດສະດີ ເພື່ອສ້າງສາພັດທະນາປະເທດຊາດ ຕາມທິດກ້າວຂຶ້ນສັງຄົມນິຍົມ; ແຈ້ງໃຫ້ຊາບວ່າ ປີ 2024 ເປັນປີທີ່ ສປປ ລາວ ເປັນປະທານໝູນວຽນອາຊຽນ ແລະ ຍັງເປັນປີທ່ອງທ່ຽວລາວ ທີ່ມີຄວາມໝາຍສຳຄັນຕໍ່ຊີວິດການເມືອງ ແລະ ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ; ຕີລາຄາສູງຕໍ່ ການພົວພັນ ລະຫວ່າ 2 ປະເທດ ລາວ-ຣັດເຊຍ. ສະເພາະສາຍພັກ ກໍໄດ້ມີການພົວພັນກັບ 3 ພັກການເມືອງໃນຣັດເຊຍ, ພ້ອມທັງໄດ້ປຶກສາຫາລືຊອກຫາຊ່ອງທາງເພື່ອຂະຫຍາຍການພົວພັນຮ່ວມມືໃນດ້ານອື່ນໆ, ເປັນຕົ້ນ: ການຄ້າ-ການລົງທຶນ, ການທ່ອງທ່ຽວ, ການແລກປ່ຽນທາງດ້ານວັດທະນະທຳ, ລວມທັງເສີມຂະຫຍາຍການພົວພັນທາງດ້ານການທູດປະຊາຊົນ, ການຮ່ວມມື ລະຫວ່າງ ອົງການຈັດຕັ້ງກຳມະບານ, ແມ່ຍິງ, ຊາວໜຸ່ມ ແລະ ເຍົາວະຊົນ.

ສະຫາຍ ມາລິນໂກວິດຈເຊີຣເກ ອາເລັກຊານໂດຼວິດຈ໌ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ ການຕ້ອນຮັບອັນອົບອຸ່ນຂອງ ບັນດາການນຳຂັ້ນສູງຂອງພັກປປລາວ, ພ້ອມທັງໄດ້ກ່າວເຖິງຈຸດປະສົງຂອງການມາຢ້ຽມຢາມ ສປປ ລາວ ໃນຄັ້ງນີ້ກໍເພື່ອເພີ່ມທະວີ ແລະ ຮັດແໜ້ນສາຍພົວພັນມິດຕະພາບລະຫວ່າງສອງພັກ, ເພື່ອສຶກສາ, ແລກປ່ຽນ ແລະ ຖອດຖອນບົດຮຽນຈາກພັກເພື່ອນມິດ ທີ່ຍຶດໝັ້ນລັດທິມາກ-ເລນິນ ແລະ ຊອກຫາຊ່ອງທາງຊຸກຍູ້ການຮ່ວມມືທາງດ້ານການຄ້າ-ການລົງທຶນ ຢູ່ ສປປ ລາວ. ສະຫາຍປະທານພັກ ຍັງໄດ້ແຈ້ງໃຫ້ຊາບກ່ຽວກັບ ການເຄື່ອນໄຫວຂອງ ພັກກອມມູນິດຊາວກອມມູນິດຣັດເຊຍ ໃນການສະໜັບສະໜູນ ລັດຖະບານຣັດເຊຍ, ປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ ແລະ ຂະຫຍາຍການພົວພັນຮ່ວມມືກັບ ບັນດາພັກກອມມູນິດໃນໂລກ. ພ້ອມກັນນີ້, ກໍຍັງໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດອັນໃຫຍ່ຫຼວງໃນດ້ານຕ່າງໆ ທີ່ ພັກ ປປ ລາວ ຍາດມາໄດ້ຕະຫຼອດໄລຍະຜ່ານມາ ແລະ ເຊື່ອໝັ້ນວ່າພາຍໃຕ້ການນຳພາຂອງ ພັກ-ລັດ ສປປ ລາວ ຈະສືບຕໍ່ຍາດໄດ້ຜົນສຳເລັດອັນໃໝ່ ໃຫຍ່ຫຼວງກວ່າເກົ່າ.

ໃນໂອກາດນີ້, ຄະນະຜູ້ແທນພັກກອມມູນິດຊາວກອມມູນິດຣັດເຊຍ ຍັງໄດ້ພົບປະກັບ ເຈົ້າແຂວງວຽງຈັນ ແລະ ບັນດາການນຳຂອງ ອົງການຈັດຕັ້ງມະຫາຊົນຈຳນວນໜຶ່ງ ເຊັ່ນ: ສູນກາງກຳມະບານລາວ, ສູນກາງສະຫະພັນແມ່ຍິງລາວ, ການນຳຂອງ ສູນກາງຊາວໜຸ່ມ ປປ ລາວ ແລະ ໄດ້ໄປຢ້ຽມຢາມສະຖານທີ່ທາງປະຫວັດສາດ ແລະ ແຫຼ່ງທ່ອງທ່ຽວວັດທະນະທຳຈຳນວນໜຶ່ງ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ. ນອກຈາກນີ້, ສອງຝ່າຍ ຍັງໄດ້ແລກປ່ຽນທັດສະນະນຳກັນ ໃນບັນຫາທີ່ສອງຝ່າຍມີຄວາມສົນໃຈ. (ຂ່າວ: ຄຕພ, ພາບ: ສຸກສະຫວັນ)

## ໄຟໄໝ້ປ່າຢູ່ເມືອງບົວລະພາ ໄດ້ກັບສູ່ສະພາບປົກກະຕິແລ້ວ

ທ່ານວັນໄຊ ພອງສະຫວັນ ເຈົ້າແຂວງຄຳມ່ວນ ພ້ອມດ້ວຍບັນດາການນຳຂັ້ນແຂວງ ແລະ ພະແນກການກ່ຽວຂ້ອງ ໄດ້ຮີບຮ້ອນລົງເຄື່ອນໄຫວຊຸກຍູ້, ປຸກລະດົມ ອຳນາດການປົກຄອງຂັ້ນເມືອງ, ການຈັດຕັ້ງບ້ານ ແລະ ປະຊາຊົນໃນເຂດທີ່ເກີດມີໄຟໄໝ້ປ່າ ໂດຍສະເພາະໃນເຂດເມືອງບົວລະພາ ຈຸດບໍລະເວນອຸທິຍານແຫ່ງຊາດຫີນໜາມໜໍ່ ກໍໄດ້ເກີດມີໄຟໄໝ້ລາມປ່າເປັນບາງຈຸດ ໃນໄລຍະ 3-4 ວັນທີ່ຜ່ານມາ ເພື່ອລະດົມທຸກພາກສ່ວນ ແລະ ທຸກກຳລັງ ພ້ອມກັນມອດໄຟ ເພື່ອບໍ່ໃຫ້ມີການໄໝ້ລາມອອກເປັນບໍລິເວນກວ້າງ ພ້ອມທັງໄດ້ປະສານສົມທົບກັບກຳລັງທະຫານອາກາດ ກະຊວງປ້ອງກັນປະເທດ ນຳໃຊ້ເຮືອບິນ ຂຶ້ນບິນມອດໄຟ ແລະ ສຳຫຼວດເນື້ອທີ່ປ່າໄມ້ໃນເຂດດັ່ງກ່າວ ເພື່ອຊອກຫາວິທີປ້ອງກັນ ແລະ ດ້ວຍຄວາມເປັນຫ່ວງເປັນໄຍຕໍ່ການດຳລົງຊີວິດ ການເປັນຢູ່ຂອງປະຊາຊົນ ໂດຍສະເພາະໃນໄລຍະລະດູແລ້ງນີ້ ອາກາດຮ້ອນອົບເອົ້າ ເປັນຕົ້ນເຫດເຮັດໃຫ້ເກີດໄຟໄໝ້ລາມປ່າໄດ້ງ່າຍ



ຊຶ່ງມາຮອດປັດຈຸ ບັນສະພາບໄຟໄໝ້ປ່າໃນເຂດດັ່ງກ່າວແມ່ນໄດ້ມອດລົງ ແລະ ກັບສູ່ສະພາບປົກກະຕິແລ້ວ.

ໃນໂອກາດລົງເຄື່ອນໄຫວຄັ້ງນີ້, ທ່ານວັນໄຊ ພອງສະຫວັນ ຍັງໄດ້ເນັ້ນໃຫ້ທຸກພາກສ່ວນໃນທົ່ວສັງຄົມ ຈົ່ງພ້ອມກັນມີສ່ວນຮ່ວມ ແລະ ມີສະຕິໃນການເຝົ້າລະວັງ ສະກັດກັ້ນບັນຫາໄຟໄໝ້ລາມປ່າ ທີ່ອາດຈະເກີດຂຶ້ນໃນທຸກເວລາ ແລະ ພ້ອມກັນເອົາໃຈໃສ່ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ ໂດຍສະເພາະຄຳສັ່ງເລກທີ 11 ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ຕ້ານ ແລະ ສະກັດກັ້ນ



ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ພ້ອມທັງ ແຈ້ງການເລກທີ 286 ຂອງແຂວງຄຳມ່ວນ ກ່ຽວກັບ ການເພີ່ມທະວີຄວາມເອົາໃຈໃສ່ໃນການຕິດຕາມ ເຝົ້າລະວັງ, ສະກັດກັ້ນ ແລະ ແກ້ໄຂບັນຫາອັກຄີໄພ ແລະ ໄຟໄໝ້ລາມປ່າ ພາຍໃນແຂວງ ແລະ ຄຳສັ່ງແນະນຳຂອງທ່ານເຈົ້າແຂວງຄຳມ່ວນ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຢູ່ພາຍໃນແຂວງຄຳມ່ວນ. ນອກນີ້, ຍັງໄດ້ຮຽກຮ້ອງໃຫ້ທຸກພາກສ່ວນ, ທຸກຊັ້ນຄົນໃນທົ່ວສັງຄົມ ຕ້ອງໄດ້ເອົາໃຈໃສ່ ປົກປັກຮັກສາຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້ໃຫ້ມີຄວາມຍືນຍົງ ແລະ ຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງຕ້ອງໄດ້ນຳໃຊ້ມາດຕະການທາງດ້ານກົດໝາຍໃຫ້ເຂັ້ມງວດຕໍ່ບຸກຄົນ, ນິຕິບຸກຄົນທີ່ບຸກລຸກທີ່ດິນປ່າໄມ້ ແລະ ລັກລອບນຳໃຊ້ຊັບພະຍາກອນປ່າໄມ້ ທີ່ບໍ່ຖືກຕາມລະບຽບກົດໝາຍ.

(ຂ່າວ: ກອງຄຳ)

## ຊ່ຽວຊານການທະຫານຫວຽດນາມ ຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງໄຊຍະບູລີ

ໃນລະຫວ່າງວັນທີ 4-6 ພຶດສະພານີ້, ຊ່ຽວຊານການທະຫານຈາກ ສສ ຫວຽດນາມທີ່ອາສາສະໝັກຮ່ວມສູ້ຮົບ ແລະ ຮັບໃຊ້ທ່ານຜູ້ນຳຂອງສປປລາວ ນຳໂດຍທ່ານ ຫວູ ກວາງ ຫຍາກ ອະດີດຊ່ຽວຊານການທະຫານພາກເໜືອ ແຂວງຝູເຖາະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງໄຊຍະບູລີ ຊຶ່ງໄດ້ພົບປະທ່ານ ເພັດພິໄຊ ສູນວິໄລ ຮອງເຈົ້າແຂວງໄຊຍະບູລີ ພ້ອມທັງແຈ້ງຈຸດປະສົງໃນການເຄື່ອນໄຫວຄັ້ງນີ້ ໂດຍສະເພາະ ເພື່ອນຳເອົາເບ້ຍໝາກກ່າມາໃຫ້ແຂວງໄຊຍະບູລີໄດ້ທົດລອງປູກ, ຢ້ຽມຢາມສະຖານທີ່ອະດີດທີ່ເຄີຍຮ່ວມສູ້ຮົບໃນສະໄໝກ່ອນພ້ອມທັງໄດ້ເລົ່າຄືນການດຳລົງຊີວິດຢູ່ລາວເປັນຕົ້ນແມ່ນການຮັບໃຊ້ ແລະ ປ້ອງກັນບັນດາທ່ານຜູ້ນຳຂອງສປປລາວເຊັ່ນ: ທ່ານອະດີດປະທານໄກສອນ ພົມວິຫານ, ທ່ານ ສຸພານຸວົງ, ທ່ານ ໜູຮັກ




ພູມສະຫວັນ ແລະ ບັນດາທ່ານຜູ້ນຳຄົນອື່ນໆ ທີ່ໄດ້ຮ່ວມກັນຕໍ່ສູ້ກັບສັດຕູຜູ້ຮຸກຮານໃນຫຼາຍບັ້ນຮົບຢູ່ໃນສປປລາວ.

ໂອກາດດັ່ງກ່າວທ່ານ ເພັດພິໄຊ ສູນວິໄລ ໄດ້ສະແດງຄວາມຍິນດີຕ້ອນຮັບຄະນະຊ່ຽວຊານການທະຫານທີ່ມາເຄື່ອນໄຫວໃນຄັ້ງນີ້ຢ່າງອົບອຸ່ນ ພ້ອມທັງສະແດງຄວາມກະຕັນຍູ້ຮູ້ບຸນຄຸນຕໍ່ຄະນະທີ່ໄດ້ອາສາສະໝັກຮ່ວມສູ້ຮົບຊ່ວຍເຫຼືອ ສປປ ລາວ ໃນອະດີດທີ່ຜ່ານມາ ແລະ ໄດ້ແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ຮັບຊາບ. ຈາກນັ້ນ, ຄະນະຊ່ຽວຊານຫວຽດນາມ ໄດ້ພົບປະທ່ານ ພົມປັນ ສຸດທິໂວຫານ ປະທານສະຫະພັນນັກຮົບເກົ່າແຂວງ, ທ່ານ ຄຳຫຼ້າ ຜີວວັນນາ ຫົວໜ້າຫ້ອງວ່າການ ແຂວງ ພ້ອມຄະນະທີ່ຫ້ອງວ່າການແຂວງ, ທ່ານ ພົມປັນ ສຸດທິໂວຫານ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງແຈ້ງສະພາບຈຸດພິເສດຂອງແຂວງ ແລະ ການເຄື່ອນໄຫວວຽກງານສະຫະພັນນັກຮົບເກົ່າແຂວງໂດຍສັງເຂບ. ຈາກນັ້ນ, ທັງສອງຝ່າຍໄດ້ແລກປ່ຽນຄຳຄິດເຫັນຊຶ່ງກັນ ແລະ ກັນໃນບັນຫາທີ່ຕ່າງຝ່າຍມີຄວາມສົນໃຈຕື່ມອີກ.

(ຂ່າວ-ພາບ: ອຸ່ນເຮືອນ ໂພທິລັກ)

## ມູນນິທິເຕົາ ລາວ-ຈີນ ອຸປະຖຳທີມນັກກິລາປັນຈັກສີລັດ ມຊ

ມູນນິທິເຕົາ ລາວ-ຈີນໄດ້ນຳເອົາເງິນ 3 ລ້ານກີບ ແລະ ເຄື່ອງດື່ມປະເພດສະຕິງ ແລະ ນໍ້າດື່ມ ມູນຄ່າ 3 ລ້ານກີບ ລວມທັງໝົດ 6 ລ້ານກີບໄປຊຸກຍູ້ທີມນັກກິລາປັນຈັກສີລັດຂອງມະຫາວິທະຍາໄລແຫ່ງຊາດ (ມຊ) ໃນໂອກາດເຂົ້າຮ່ວມແຂ່ງຂັນງານມະຫະກຳກິລາມະຫາວິທະຍາໄລລາວ ຄັ້ງທີ 2 ຈັດຂຶ້ນວັນທີ 5-14 ພຶດສະພາ 2024 ທີ່ ມຊ ນະຄອນຫຼວງວຽງຈັນ.

ພິທີມອບ-ຮັບການອຸປະຖຳຄັ້ງນີ້ຈັດຂຶ້ນວັນທີ 6 ພຶດສະພາ 2024 ທີ່ຫ້ອງການຄຸ້ມຄອງຫໍພັກຊີເກມ ວິທະຍາເຂດ ມຊກ່າວມອບໂດຍທ່ານບຸນທະວີ ວິໄລພອນ ປະທານ ແລະ ທ່ານ ນາງ ອານິສາ ໄຊຍະກຸມມານ ຮອງປະທານມູນນິທິເຕົາ ລາວ-ຈີນ ແລະ ກ່າວຮັບໂດຍທ່ານ ອາລີສັກ ສິງສຸວົງ ຜູ້ຊ່ວຍຄູຝຶກກິລາປັນຈັກສີລັດ ມີນັກກິລາ ແລະ ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍເຂົ້າຮ່ວມ.

ໂອກາດນີ້ທ່ານ ອາລີສັກ ສິງສຸວົງ ຕາງໜ້າໃຫ້ຄູຝຶກ ແລະ ທີມນັກກິລາປັນຈັກສີລັດ ມຊ ໄດ້ສະແດງຄວາມຂອບອົກຂອບໃຈມາຍັງມູນນິທິເຕົາລາວ-ຈີນ ທີ່ໄດ້ໃຫ້ການອຸປະຖຳເງິນ ແລະ ເຄື່ອງດື່ມແກ່ທີມນັກກິລາປັນຈັກສີລັດຂອງ ມຊ ຄັ້ງນີ້ ຊຶ່ງກິລາປັນຈັກສີລັດຈະເລີ່ມແຂ່ງຂັນນັບແຕ່ວັນທີ 6 ພຶດສະພາ 2024 ເປັນຕົ້ນໄປ ໂດຍມີ 3 ພາກສ່ວນເຂົ້າຮ່ວມແຂ່ງຂັນ ມີ 12 ລາຍການແຂ່ງຂັນ ໃນນັ້ນແຂ່ງຂັນຟ້ອນ 5 ລາຍການ ແລະ ແຂ່ງຂັນຕໍ່ສູ້ 7 ລາຍການ ເພື່ອຊີງໄຊເອົາ 12 ຫຼຽນ. ສ່ວນທີມນັກກິລາປະກອບມີທີມນັກກິລາປັນຈັກສີລັດ ມຊ ທີມນັກກິລາປັນຈັກສີລັດສະຖາບັນກິລາກາຍະກຳ ແລະ ທີມນັກກິລາປັນຈັກສີລັດກະຊວງປ້ອງກັນປະເທດ ສຳລັບທີມນັກກິລາປັນຈັກສີລັດ ມຊ ຕັ້ງຄວາມຫວັງໄວ້ຈະຍາດໃຫ້ໄດ້ 2-3 ຫຼຽນຄຳ ໃນງານມະຫະກຳກິລາມະຫາວິທະຍາໄລລາວ ຄັ້ງທີ 2.



(ຂ່າວ: ແສງຈັນ; ພາບ: ສິມສະຫວັນ)

**ປຸກລະດົມສະຕິຕື່ນຕົວ ແລະ ປະຕິບັດເປັນເຈົ້າປະເທດຊາດ ກໍຄື ສົ່ງເສີມຫົວຄິດປະດິດສ້າງຂອງທົ່ວສັງຄົມ**

# ຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ ເລຂາຄະນະພັກຮາກຖານ ໜ່ວຍພັກບ້ານ ອ້ອມຂ້າງເມືອງໂຂງ




ຊຸດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ເລຂາຄະນະພັກຮາກຖານ, ໜ່ວຍພັກບ້ານ-ບ້ານໃຫຍ່, ກຸ່ມບ້ານ ແລະ ສຳນັກງານ-ກົມກອງອ້ອມຂ້າງເມືອງໂຂງ ໄດ້ຈັດຂຶ້ນແຕ່ວັນທີ 6-8 ພຶດສະພານີ້ທີ່ເມືອງໂຂງ ແຂວງຈຳປາສັກ ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ສະນັ່ນ ສີພາພົມມະຈັນ ຮອງເລຂາພັກແຂວງ ຫົວໜ້າຄະນະຈັດຕັ້ງແຂວງ ຜູ້ຊີ້ນຳວຽກງານການເມືອງ- ແນວຄິດ, ວຽກພັກ-ພະນັກງານ, ສະຫາຍ ສຸປານີ ສີລິປຸນໂຍ ຄະນະປະຈຳພັກແຂວງຫົວໜ້າຄະນະໂຄສະນາອົບຮົມແຂວງ, ມີສະຫາຍຮອງຫົວໜ້າຄະນະຈັດຕັ້ງແຂວງ, ເລຂາພັກເມືອງ, ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກົມກອງອ້ອມຂ້າງເມືອງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ສະຫາຍ ສະນັ່ນ ສີພາພົມມະຈັນ ໄດ້ກ່າວວ່າ: ການເປີດຊຸດອົບຮົມຄັ້ງນີ້ ກໍເພື່ອເປັນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ມະຕິຕົກລົງຂອງຄະນະປະຈຳພັກແຂວງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກບ້ານ, ບ້ານໃຫຍ່, ກຸ່ມບ້ານ ແລະ ສຳນັກງານ-ກົມກອງອ້ອມຂ້າງເມືອງ ແລະ ນະຄອນໃນທົ່ວແຂວງຈຳປາສັກ; ເພື່ອເປັນການປັບປຸງຍົກລະດັບຄວາມຮູ້ ແລະ ຄວາມສາມາດໃຫ້ ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກບ້ານ, ນາຍບ້ານ-ກຸ່ມບ້ານ ແລະ ສຳນັກງານກົມກອງອ້ອມຂ້າງເມືອງ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກແຕ່ລະໄລຍະ; ທັງເປັນການສ້າງຄວາມສາມາດໃນການຈັດຕັ້ງປະຕິບັດຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ລັດ, ມະຕິ, ສຳສັ່ງ ແລະບັນດານິຕິກຳກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ, ວຽກງານກວດກາ, ວຽກງານປົກຄອງ, ວຽກງານການເງິນທັງນີ້ກໍເພື່ອເປັນພື້ນຖານໃນການໝູນໃຊ້ທິດສະດີ ແລະ ພຶດຕະກຳເຂົ້າໃນການຊີ້ນຳ-ນຳພາຢູ່ຮາກຖານພັກ.

ການຝຶກອົບຮົມຄັ້ງນີ້ ຫຼັກສູດປະກອບດ້ວຍ 5 ກຸ່ມວຽກເປັນຕົ້ນ: ກຸ່ມວຽກພັກ, ກຸ່ມວຽກພະນັກງານ, ກຸ່ມວຽກກວດກາ, ກຸ່ມວຽກການປົກຄອງ ແລະ ກຸ່ມວຽກການເງິນ, ປະກອບມີ 16 ບົດເປັນຕົ້ນ: ບົດທີ 1 ທັດສະນະຂອງພັກປະຊາຊົນປະຕິວັດລາວ ຕໍ່ວຽກງານກໍ່ສ້າງພັກ ແລະ ຂໍ້ກຳນົດ ຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ ລົງວັນທີ 26/6/2012 ວ່າດ້ວຍຄວາມຮັບຜິດຊອບຂອງພະນັກງານນຳພາ-ຄຸ້ມຄອງຕໍ່ການປະຕິບັດໜ້າທີ່ການເມືອງ; ບົດທີ 2 ທີ່ຕັ້ງພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ ແບບແຜນວິທີເຮັດວຽກຂອງຄະນະພັກຮາກຖານ, ກຸ່ມບ້ານ ແລະ ບ້ານໃຫຍ່, ໜ່ວຍພັກບ້ານໃນຕົວເມືອງ ແລະ ໜ່ວຍພັກບ້ານທີ່ງພຽງ; ບົດທີ 3 ຍົກສູງຄຸນນະພາບການນຳພາຮອບດ້ານຂອງການຈັດຕັ້ງຮາກຖານພັກ, ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ແນະນຳການຊຸມນຸມບົດການກໍ່ສ້າງໜ່ວຍພັກປອດໃສເຂັ້ມແຂງ ແລະ ອື່ນໆ.

(ຂ່າວ-ພາບ: ວິທະຍຸ-ໂທລະພາບເມືອງໂຂງ)

# ກອງປະຊຸມຄົບຄະນະບໍລິຫານງານພັກເມືອງຄອບ ຄັ້ງທີ 12 ສະໄໝທີ V

ກອງປະຊຸມຄົບຄະນະບໍລິຫານງານພັກເມືອງຄອບ ຄັ້ງທີ 12 ສະໄໝທີ 5 ໄດ້ຈັດຂຶ້ນເມື່ອບໍ່ດົນມານີ້ທີ່ເມືອງດັ່ງກ່າວ ໂດຍການເປັນປະທານຂອງສະຫາຍ ສົມນຶກ ສິງຄຳ ເລຂາພັກເມືອງ ວ່າການເຈົ້າເມືອງໆຄອບ ແຂວງໄຊຍະບູລີ, ໃຫ້ກຽດເຂົ້າຮ່ວມຂອງສະຫາຍ ພິຈອ ຄຳແພງ ເພັດ ກຳມະການປະຈຳພັກແຂວງ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກຫ້ອງການ, ອົງການ, ກົມກອງ ແລະ ເລຂາພັກບ້ານພາຍໃນເມືອງເຂົ້າຮ່ວມ.



ສະຫາຍສົມນຶກສິງຄຳ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ. ຈາກນັ້ນ, ໃນກອງປະຊຸມກໍໄດ້ຮັບຟັງການຜ່ານບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດການນຳພາ-ຊີ້ນຳວຽກງານຮອບດ້ານ 3 ເດືອນຕົ້ນປີ ແລະ ທິດທາງແຜນການ 9 ເດືອນທ້າຍປີ 2024 ຊຶ່ງຕະຫຼອດໄລຍະ 3 ເດືອນທີ່ຜ່ານມາ ເມືອງຄອບໄດ້ຮັບຜົນກະທົບທາງດ້ານເສດຖະກິດ-ການເງິນ, ການເໜັງຕີງຂອງອັດຕາແລກປ່ຽນ, ລາຄາສິນຄ້າເພີ່ມຂຶ້ນ ໄພທຳມະຊາດ, ການລະບາດຂອງພະຍາດສັດລ້ຽງ ແລະ ອື່ນໆ ໄດ້ສົ່ງຜົນກະທົບທາງກົງຕໍ່ເມືອງບໍ່ໜ້ອຍ, ແຕ່ພາຍໃຕ້ການນຳພາ - ຊີ້ນຳຂອງອົງການປົກຄອງເມືອງ. ຄວາມເປັນເຈົ້າການຂອງບັນດາຫ້ອງການພາຍໃນເມືອງ ແລະກຳລັງແຮງຂອງປະຊາຊົນບັນດາເຜົ່າ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຕໍ່ເນື່ອງ ແລະ ມີຜົນສຳເລັດໃນຫຼາຍດ້ານ ຊຶ່ງໄດ້ສະແດງອອກໃນການຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດ ໂຄງການລົງທຶນຢູ່ພາຍໃນເມືອງ. ໃນນັ້ນ, ການລົງທຶນຂອງລັດ 8 ໂຄງການ ມູນຄ່າ 469,08 ລ້ານກີບ ແລະ ເອກະຊົນ 19 ໂຄງການ ມູນຄ່າ 170,1 ຕື້ກີບ, ຊຸກຍູ້ການປູກ, ການລ້ຽງຂອງປະຊາຊົນເພື່ອຕອບສະໜອງການບໍລິໂພກຢູ່ພາຍໃນເມືອງໂດຍພື້ນຖານ, ຕິດຕາມການສ້ອມແປງຊົນລະປະທານ 3 ໂຄງການ ສຳເລັດ 100%, ຊຸກຍູ້ບັນດາໂຮງງານທີ່ແຂວງອະນຸຍາດຂຸດຄົ້ນ, ປຸງແຕ່ງຫີນປູ ແລະ ແຮ່ທາດຟູອໍລາຍ ໃນເຂດບ້ານດອນຕັນ ແລະ ບ້ານນ້ຳໂຕ່ມ.

ໂອກາດດຽວກັນໃນກອງປະຊຸມ ຍັງໄດ້ຮັບຟັງການຈັດຕັ້ງປະຕິບັດວຽກງານພັກ-ພະນັກງານ ໃນ 3 ເດືອນຕົ້ນປີ ແລະ ທິດທາງແຜນການ 9 ເດືອນທ້າຍປີ 2024, ຮັບຟັງບົດລາຍງານການຈັດຕັ້ງປະຕິບັດວຽກງານແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສະຫະພັນນັກຮົບເກົ່າ ໃນ 3 ເດືອນຕົ້ນປີ ແລະ ທິດທາງແຜນການ 9 ເດືອນທ້າຍປີ 2024, ບົດລາຍງານການປົວລະບັດຮັກສາ ແລະ ການເກັບກູ້ຜົນຜະລິດລະດູແລ້ງ ແລະ ການກະກຽມຜະລິດລະດູຝົນ, ບົດລາຍງານການຈັດຕັ້ງປະຕິບັດການເກັບລາຍຮັບເຂົ້າງົບປະມານ 3 ເດືອນຕົ້ນປີ ແລະ ທິດທາງແຜນການ 9 ເດືອນທ້າຍປີ 2024 ແລະ ເອກະສານອື່ນໆອີກຈຳນວນໜຶ່ງ.

(ຂ່າວ: ພົມມະນີ ອິນສະຫວັນ)

## ຄວາມໝາຍປະຫວັດສາດ... (ຈາກໜ້າ 1)

ຄວາມສາມັກຄີຮ່ວມສຳພັນສູ້ຮົບ ລະຫວ່າງ 3 ຊາດອິນດູຈີນ ມີຄວາມແໜ້ນແຟ້ນຍິ່ງຂຶ້ນ.

ສຳລັບຢູ່ ຫວຽດນາມ ແມ່ນໄລຍະທີ່ປະຊາຊົນຫວຽດນາມຕໍ່ສູ້ຕ້ານກັບພວກລ່າເມືອງຂຶ້ນແບບເກົ່າດ້ວຍຄວາມຕັດສິນໃຈທີ່ວ່າ: "ຍອມເສຍສະຫຼະຊີວິດເພື່ອປະເທດຊາດ". ບັນດາກຳລັງປະກອບອາວຸດ ຂອງຫວຽດນາມ ຍາດໄດ້ໄຊຊະນະຢ່າງຕໍ່ເນື່ອງໃນທຸກສະໜາມຮົບ ໂດຍເລີ່ມຈາກບັ້ນຮົບດັບສູນກຳລັງ ຂອງສັດຕູ 2 ໝື່ນຄົນ ທີ່ບຸກເຂົ້າເຂດທີ່ໝັ້ນຫວຽດບັກ (1947) ກ້າວໄປເຖິງໄຊຊະນະບັ້ນຮົບຊາຍແດນ (1950), ບັ້ນຮົບຮວ່າບິງ (1951), ບັ້ນຮົບໄຕບັກ (1952) ແລະ ບັ້ນຮົບພາກເໜືອລາວ (1953). ໄຊຊະນະດັ່ງກ່າວໄດ້ສ້າງທ່າ ແລະ ກຳລັງແຮງອັນໃໝ່ໃຫ້ການເຕີບໃຫຍ່ຂະຫຍາຍຕົວດ້ວຍຈຳນວນ ແລະ ຄຸນນະພາບຂອງກອງທັບ ແລະ ປະຊາຊົນຫວຽດນາມ ເປັນເຈົ້າການໃນການບຸກໂຈມຕີສັດຕູຢູ່ທຸກສະໜາມຮົບ ເຮັດໃຫ້ສັດຕູຕົກຢູ່ໃນທ່າຮັບ.

ຕາມແຜນການຂອງສັດຕູ ຈະສ້າງດຽນບຽນຟູ ໃຫ້ກາຍເປັນຖານທັບທີ່ເຂັ້ມແຂງທີ່ສຸດ ເພື່ອຄວບຄຸມອາຊີຕາເວັນອອກສ່ຽງໃຕ້. ພວກເຂົາໄດ້ຖືເອົາດຽນບຽນຟູ ເປັນຖານທັບທີ່ເປັນຂໍກຸແຈ, ເປັນແປ້ນຢັນເພື່ອຍາດເອົາພາກຕາເວັນຕົກສ່ຽງເໜືອ ຂອງຫວຽດນາມ, ພາກເໜືອ ຂອງລາວຄືນ. ຖານທັບດຽນບຽນຟູ ຕັ້ງຢູ່ຫວ່າງພູ, ເປັນທົ່ງພຽງຍາວ 19 ກິໂລແມັດ, ກວ້າງ 6-7 ກິໂລແມັດ ອ້ອມຮອບດ້ວຍສາຍພູທີ່ສູງປະມານ 1.000 ກວ່າແມັດ ກາຍເປັນກຳແພງທຳມະຊາດປ້ອງກັນຢ່າງແໜ້ນໜາ. ພາຍໃນຖານທັບມີລະບົບຄ້າຍ 4 ແຫ່ງ, ມີເດີ່ນບິນສອງແຫ່ງ, ມີລະບົບການກໍ່ສ້າງປ້ອງກັນແບບແໜ້ນໜາ, ສັບສົນ ແລະ ທັນສະໄໝ. ຖານທັບດຽນບຽນຟູ ມີກຳລັງສັດຕູເຂົ້າປະຈຳການ 16.200 ຄົນ, ລວມມີ 21 ກອງພັນ. ນອກນັ້ນ ຍັງມີທະຫານໂດດຈ້ອງ ແລະ ທະຫານເຄື່ອນທີ່ໄວທີ່ສຸດໃນອິນດູຈີນ ທີ່ເຂົ້າປະຈຳການຢູ່ດຽນບຽນຟູ. ພວກເຂົາໄດ້ຈັດວາງກຳລັງຕາມຈຸດປ້ອມໝັ້ນ 49 ແຫ່ງ ຢູ່ 3 ເຂດຄື: ເຂດເໜືອ, ເຂດໃຕ້ ແລະ ເຂດໃຈກາງ ເພື່ອຊ່ວຍໜູນຊຶ່ງກັນ ແລະ ກັນ.

ຢ່າງໃດກໍຕາມ ເພື່ອປົດປ່ອຍດຽນບຽນຟູ, ກົມການເມືອງສູນກາງພັກກອມມູນິດຫວຽດນາມ ໄດ້ເປີດກອງປະຊຸມ ເພື່ອຕີລາຄາສະພາບການ ຢູ່ສະໜາມຮົບອິນດູຈີນ, ໄດ້ມີມະຕິຕົກລົງເປີດບັ້ນຮົບຍຸດທະສາດໃນລະດູບານໃໝ່ປີ 1953-1954. ວາງແຜນນະໂຍບາຍເປີດການບຸກໂຈມຕີສັດຕູໃນສະໜາມຮົບການຕ່າງປະເທດ ເພື່ອສ້າງເງື່ອນໄຂໃຫ້ບັ້ນຮົບດຽນບຽນຟູ. ພ້ອມກັນນັ້ນ, ກອງບັນຊາການສູງສຸດ ໄດ້ອອກຄຳສັ່ງໃຫ້ເປີດບັ້ນຮົບບຸກໂຈມຕີຢ່າງແຂງແຮງໃນທົ່ວສະໜາມຮົບອິນດູຈີນດ້ວຍ 5 ບາດຄ້ອນຍຸດທະສາດຄື:ວັນທີ 10/12/1953 ກອງທັບຫວຽດນາມໄດ້ເປີດບັ້ນຮົບບຸກໂຈມຕີເຂົ້າເທສະບານຕາແສງລາຍເຈົ່າ ແລະສາມາດປົດປ່ອຍລາຍເຈົາໄດ້. ໃນທ້າຍເດືອນ 12/1953 ໂດຍສົມທົບກັບທະຫານຫວຽດນາມ ກອງທັບລາວອິດສະຫຼະ ໄດ້ເປີດບັ້ນຮົບບຸກໂຈມຕີເຂົ້າພາກກາງຂອງລາວ, ພ້ອມນັ້ນ ກອງທັບລາວອິດສະຫຼະສົມທົບກັບ ກອງທະຫານອາສາສະໝັກຫວຽດນາມ ໄດ້ບຸກຕີລົງພາກໃຕ້ຂອງລາວ, ປົດປ່ອຍຕົວເມືອງອັດຕະປື, ສ່ວນໜຶ່ງຂອງແຂວງສາລະວັນ, ດົງບໍລະເວນ, ເວີນໄຊ, ຊຽງປອງ; ກອງທັບປະຊາຊົນຫວຽດນາມ ເປີດບັ້ນຮົບໄຕຫາງວຽນ ເປັນເວລາ 12 ວັນ-ຄືນ ປົດປ່ອຍເທສະບານຕາແສງກອນຕູມ. ໃນທ້າຍເດືອນ 1/1954 ກອງທະຫານລາວ-ຫວຽດນາມ ໄດ້ເປີດບັ້ນຮົບບຸກໂຈມຕີແນວປ້ອງກັນຂອງສັດຕູ ຢູ່ລ້ອງນ້ຳອູ ກ້າວສູ່ ແຂວງຫຼວງພະບາງ ແລະ ໂຈມຕີຂຶ້ນພາກເໜືອຂອງລາວ, ປົດປ່ອຍແຂວງຜົ້ງສາລີ. ການບຸກໂຈມຕີດ້ວຍ 5 ບາດຄ້ອນຍຸດທະສາດ ລ້ວນແຕ່ໄດ້ຮັບໄຊຊະນະ ແລະ ເປັນການທັບມ້າງກົນອຸບາຍຂອງນາວາ, ສ້າງເງື່ອນໄຂໃຫ້ກອງທັບຫວຽດນາມ ເປີດບັ້ນຮົບດຽນບຽນຟູ.

ວັນທີ 6/12/1953 ກົມການເມືອງສູນກາງພັກຫວຽດນາມ ໄດ້ເປີດກອງປະຊຸມ ແລະ ມີມະຕິຕົກລົງເປີດບັ້ນຮົບດຽນບຽນຟູ ໃນລະດູບານໃໝ່ 1953-1954, ໄດ້ກຳນົດວ່າ: "ດຽນບຽນຟູແມ່ນກຸ່ມຖານທີ່ໝັ້ນທີ່ເຂັ້ມແຂງ ແຕ່ກໍມີຈຸດບົກຜ່ອງພື້ນຖານຄືມັນຖືກໂດດດ່ຽວ" ແລະ ແຕ່ງຕັ້ງໃຫ້ ທ່ານ ພົນເອກ ຫວໍ ຫງວຽນ ຢາບ ລັດຖະມົນຕີວ່າການກະຊວງປ້ອງກັນຊາດ ເປັນເລຂາຄະນະພັກດ້ານຮົບ ແລະ ເປັນຜູ້ບັນຊາການທະຫານສູງສຸດ, ລັດຖະບານ ໄດ້ຕົກລົງສ້າງຕັ້ງສະພາສະໜອງເຄື່ອງອຸປະໂພກ ແລະ ບໍລິໂພກ ໃຫ້ແນວໜ້າ ໂດຍແມ່ນ ທ່ານ ຟາມ ວັນດົງ ເປັນປະທານ.

ປະຕິບັດຕາມມະຕິຕົກລົງ ຂອງກົມການເມືອງສູນກາງພັກ, ກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ກຽມພ້ອມເພື່ອສະໜາມຮົບ ໂດຍປະຕິບັດຄຳຂວັນທີ່ວ່າ: "ທຸກສິ່ງທຸກຢ່າງເພື່ອແນວໜ້າ, ທຸກສິ່ງທຸກຢ່າງເພື່ອຕີເອົາໄຊຊະນະ". ການບຸກໂຈມຕີດຽນບຽນຟູ ເປັນເວລາ 55 ວັນ-ຄືນ ໂດຍແບ່ງອອກເປັນ 3 ຄັ້ງໃຫຍ່: ຄັ້ງທີ 1 ເລີ່ມແຕ່ວັນທີ 13-17/3/1954 ກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ດັບສູນ 2 ກຸ່ມຖານທີ່ໝັ້ນຢູ່ຮິມລາມ ແລະ ດົກເລີບຢ່າງຮາບຄາບ ບັງຄັບໃຫ້ສັດຕູອອກມາຍອມຈຳນົນ. ຄັ້ງທີ 2 ເລີ່ມແຕ່ວັນທີ 30 ເດືອນ 3 ຮອດທ້າຍເດືອນ 4/1954, ຮັດແຄບວົງປິດລ້ອມເພື່ອແບ່ງແຍກສັດຕູອອກແລ້ວບຸກໂຈມຕີຢ່າງລຽນຕິດ, ຢຶດໄດ້ກຸ່ມຖານທີ່ໝັ້ນສ່ວນໃຫຍ່ລຽບຕາມຈຸດສູງທາງທິດ ຕາເວັນອອກ. ຄັ້ງທີ 3 ໃນວັນທີ 1/5/1954 ກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ບຸກເຂົ້າດັບສູນເຮືອນຮັງສຸດທ້າຍ ຂອງສັດຕູ ຢູ່ດຽນບຽນຟູ, ວັນທີ 7/5/1954 ນາຍພົນນາວາ ພ້ອມກັບເສນາທິການ ທະຫານທັງໝົດ ໄດ້ອອກມາຍອມຈຳນົນ. ບັ້ນຮົບດຽນບຽນຟູຍາດໄດ້ໄຊຊະນະອັນຍິ່ງໃຫຍ່, ດັບສູນ ແລະ ຈັບເປັນສະເລີຍເສິກ 16.200 ຄົນ, ຍິງເຮືອບິນຕົກ 62 ລຳ, ຢຶດ ແລະ ທຳລາຍອາວຸດຍຸດໂທປະກອນພາຫະນະສົງຄາມ ຂອງສັດຕູໄດ້ທັງໝົດ.

ໄຊຊະນະບັ້ນຮົບດຽນບຽນຟູ ແມ່ນຈຸດສູງສຸດ, ແມ່ນການທົດສອບກຳລັງແຮງຮອບດ້ານ, ດຸເດືອດຊີ້ຂາດທີ່ສຸດໃນພາລະກິດຕໍ່ສູ້ກູ້ຊາດ ລະຫວ່າງ ກອງທັບປະຊາຊົນຫວຽດນາມກັບພວກລ່າເມືອງຂຶ້ນຜູ້ຮຸກຮານ. ໄຊຊະນະດຽນບຽນຟູ ບໍ່ພຽງແຕ່ແມ່ນການປະກາດເຖິງການປະລາໄຊ ຂອງພວກລ່າເມືອງຂຶ້ນແບບເກົ່າ ຢູ່ຫວຽດນາມ ກໍຄືຢູ່ໃນອິນດູຈີນ, ແຕ່ຍັງເປັນການຕີເອົາຊະນະຈັກກະພັດແບບໃໝ່ ຂອງກອງທັບປະຊາຊົນຫວຽດນາມ.

ໄຊຊະນະດຽນບຽນຟູ ແມ່ນໄຊຊະນະທີ່ສະຫງ່າສະໄຫວທີ່ສຸດ ໃນປະຫວັດສາດ ການຕໍ່ສູ້ຕ້ານການຮຸກຮານຈາກຈັກກະພັດພາຍນອກ ຂອງປະຊາຊົນຫວຽດນາມ ທີ່ມີກຽດສະຫງ່າ. ໄດ້ຖືກບັນທຶກເຂົ້າໃນປະຫວັດສາດຂອງຊາດ ແລະ ຂອງໂລກໃນສະຕະວັດທີ XX ຊຶ່ງໄດ້ທັບມ້າງທີ່ຕັ້ງ ລະບົບຫົວເມືອງຂຶ້ນຂອງລັດທິຈັກກະພັດ. ໄດ້ເຮັດໃຫ້ສັດຈະທຳມີຄວາມສະຫວ່າງສະໄຫວຂຶ້ນຢູ່ໃນຊາດໜຶ່ງ ທີ່ເຄີຍເປັນຫົວເມືອງຂຶ້ນ, ເຄິ່ງສັກດີນາ, ເສດຖະກິດຫຼ້າຫຼັງ ແລະ ຂະຫຍາຍຕົວຊັກຊ້າ, ກຳລັງທະຫານຍັງອ່ອນນ້ອຍ, ພາຫະນະອຸປະກອນຍັງມີໜ້ອຍ, ແຕ່ມີຄວາມສາມັກຄີຢ່າງແໜ້ນແຟ້ນ ພາຍໃຕ້ການ ນຳພາ-ຊີ້ນຳ ຂອງພັກ ແລະ ປະທານ ໂຮ່ຈີມິນ ຜູ້ນຳທີ່ຍິ່ງໃຫຍ່ ຮູ້ໝູນໃຊ້ກຳລັງປະກອບອາວຸດທົ່ວປວງຊົນ ເພື່ອເຮັດສົງຄາມປະຊາຊົນ, ສາມາດຕີເອົາໄຊຊະນະສັດຕູຜູ້ຮຸກຮານ ທີ່ມີພື້ນຖານເສດຖະກິດ ແລະ ການທະຫານເຂັ້ມແຂງ, ທັນສະໄໝກວ່າຫຼາຍເທົ່າ.

ໄຊຊະນະດຽນບຽນຟູ ບໍ່ພຽງແຕ່ແມ່ນໄຊຊະນະ ຂອງປະຊາຊົນຫວຽດນາມເທົ່ານັ້ນ, ແຕ່ຍັງແມ່ນໄຊຊະນະຂອງປະຊາຊົນລາວ ແລະ ປະຊາຊົນກຳປູເຈຍ ທີ່ໄດ້ຮ່ວມສຳພັນສູ້ຮົບ, ຮ່ວມຊຸມຄອງຕ້ານກັບສັດຕູໂຕດຽວກັນ ເພື່ອປົດປ່ອຍຕົນເອງ. ໄຊຊະນະດັ່ງກ່າວ ໄດ້ດັບມອດເຈດຈຳນົງ ແລະ ການຮຸກຮານ ຂອງລັດທິລ່າເມືອງຂຶ້ນແບບເກົ່າ, ບັງຄັບໃຫ້ພວກເຂົາຈຳຕ້ອງຍອມເຊັນສັນຍາເຊີແນວກ່ຽວກັບອິນດູຈີນ, ຮັບຮູ້ຄວາມເປັນເອກະລາດແຫ່ງຊາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງຫວຽດນາມ, ລາວ ແລະ ກຳປູເຈຍ.

ສຳລັບ ສປປ ລາວ, ໄຊຊະນະດຽນບຽນຟູ ໄດ້ມີຄວາມສຳຄັນທີ່ສຸດແຫ່ງຄວາມສາມັກຄີແບບພິເສດ, ຮ່ວມສຳພັນສູ້ຮົບລະຫວ່າງ ລາວ-ຫວຽດນາມ, ເປັນໄຊຊະນະຕ້ານສັດຕູຕົວດຽວກັນ, ປະສານສົມທົບ ແລະ ອຸດໜູນຊຶ່ງກັນ ແລະ ກັນ.

(ໂດຍ: ສີວັນ)

## ແຈ້ງຂ່າວມໍລະນະກຳ



ພວກຂ້າພະເຈົ້າ ຄອບຄົວສຸລິວົງ, ຄອບຄົວຫຼວງລາດ, ຄອບຄົວປະຖຳມະວົງ, ຄອບຄົວຕະວິນຍານ ພ້ອມດ້ວຍຄອບຄົວ ລູກ ແລະ ຫຼານໝົດທຸກຄົນ ຂໍແຈ້ງຂ່າວຄວາມເສົ້າສະຫຼົດໃຈ ເຖິງຍາດຕິພີ່ນ້ອງ ຊາບທົ່ວເຖິງກັນວ່າ: **ແມ່ຕູ້ ຄຳພວງ ສຸລິວົງ** ຜູ້ເປັນແມ່ຕູ້ ເປັນແມ່ ເປັນແມ່ເຖົ້າ ໄດ້ເຖິງແກ່ມໍລະນະກຳແລ້ວ ໃນວັນທີ 4/5/2024 ເວລາ 9:15 ໂມງ ດ້ວຍໂຣກຊະລາ ລວມອາຍຸໄດ້ 95 ປີ. ສ່ວນສົບຂອງເພິ່ນ ໄດ້ບຳເພັນກຸສົນ ທີ່ເຮືອນຂອງເພິ່ນເອງ ບ້ານໜອງບອນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ

- ວັນອັງຄານ ທີ 7/5/2024 ເປັນວັນຊາປະນະກິດສົບ ທີ່ວັດທາດຝຸ່ນ ເວລາ 13:00 ໂມງ
- ວັນພະຫັດ ທີ 9/5/2024 ເປັນມື້ຫ້າງຫາກະກຽມ ຕັ້ງກອງແຈກທານ
- ວັນສຸກ ທີ 10/5/2024 ຕອນເຊົ້າເປັນມື້ໃສ່ບາດ ພະ 9 ອົງ.

# ເມືອງນ້ຳບາກ ເອົາໃຈໃສ່ນຳພາອົງການຈັດຕັ້ງມະຫາຊົນເຄື່ອນໄຫວວຽກງານຂອງຕົນ

ໂດຍ: ບ.ກ



ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ແມ່ນພາກສ່ວນທີ່ສຳຄັນທີ່ຂາດບໍ່ໄດ້ເປັນອົງປະກອບໃນການເຄື່ອນໄຫວປົກປັກຮັກສາ-ພັດທະນາປະເທດຊາດຕາມພາລະບົດບາດ, ສິດ, ໜ້າທີ່ຂອງຕົນ. ຍ້ອນເຫັນຄວາມສຳຄັນທີ່ເປັນກຳລັງແຮງໃນການຊຸກຍູ້ປະກອບສ່ວນໃນທຸກວຽກງານ. ເມືອງນ້ຳບາກ ແຂວງຫຼວງພະບາງ ຈຶ່ງໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມໃຫ້ເຄື່ອນໄຫວເປັນປົກກະຕິເຊັ່ນ: ວຽກງານແນວລາວສ້າງຊາດໄດ້ຕັ້ງໜ້າເຄື່ອນໄຫວສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າໃຫ້ມີຄວາມຮັກຊາດ, ຮັກສາມູນເຊື້ອຄວາມສາມັກຄີ, ສິລະປະ-ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງບັນດາເຜົ່າໄວ້ໃຫ້ໝັ້ນຄົງ; ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ໃນປີ 2023 ເມືອງໄດ້ປະເມີນບ້ານສາມັກຄີປອງດອງໄດ້ 8 ບ້ານ, ທົ່ວເມືອງມີຄອບຄົວສາມັກຄີປອງດອງ 12.490 ຄອບຄົວ ກວມ 91%, ບ້ານສາມັກຄີປອງດອງທັງໝົດ 81 ບ້ານ ກວມ 95%, ສຳເລັດການເກັບຂໍ້ມູນຊົນເຜົ່າພາຍໃນເມືອງ, ສຳເລັດກອງປະຊຸມຄົບຄະນະກຳມະການແນວລາວສ້າງຊາດ ຄັ້ງທີ 3 ສະໄໝທີ VII ປະຈຳປີ 2022, ຄົ້ນຄວ້າ-ປຶກສາຫາລືວຽກງານສາສະໜາ 7 ບ້ານເຂດເທດສະບານເມືອງ, ຊຸກຍູ້ການຈັດງານບຸນປະເພນີທາງສາສະໜາ 4 ຄັ້ງ, ທຽບໃສ່ແຜນປະຕິບັດໄດ້ 80%, ຊຸກຍູ້ຄະນະອົງການພຸດທະສາສະໜາສຳພັນລາວ (ອພສ) ເມືອງລົງບັນຍາຍທຳໄດ້ 2 ບ້ານ, ລົງປັບປຸງຄະນະກຳມະການແນວລາວສ້າງຊາດບ້ານໄດ້ 1 ບ້ານ, ເກັບກຳທາງສຽງສັງຄົມສົ່ງໃຫ້ແນວລາວສ້າງຊາດແຂວງໄດ້ 2 ຄັ້ງ, ລົງແກ້ໄຂບັນຫາສາສະໜາຢູ່ບ້ານໂພນມະນີ 1 ຄັ້ງ ແລະ ທົ່ວນາ 1 ຄັ້ງ, ທົ່ວເມືອງມີຜູ້ເຊື່ອຖືສາສະໜາຄຣິດສະຕຽນ 362 ຄອບຄົວ ມີພົນລະເມືອງ 2.088 ຄົນ.

ວຽກງານຊາວໜຸ່ມ-ເຍົາວະຊົນ ໄດ້ລົງເຜີຍແຜ່ກົດໝາຍ, ແນວທາງນະໂຍບາຍຂອງພັກໃຫ້ຊາວໜຸ່ມ-ໄວໜຸ່ມມີຄວາມຕື່ນຕົວທາງດ້ານການເມືອງໄດ້ 116 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 1.732 ຄົນ, ຍິງ 577 ຄົນ, ໄດ້ບຳລຸງພາລະບົດບາດໜ່ວຍຊາວໜຸ່ມໄດ້ 116 ໜ່ວຍ ທຽບໃສ່ແຜນປະຕິບັດໄດ້ 100%, ປະກາດເມືອງຊາວໜຸ່ມ 4 ບຸກປະຈຳປີ 2022 ສຳເລັດ, ຍົກຍ້າຍສະມາຊິກຊາວໜຸ່ມໄປບ່ອນໃໝ່ໄດ້ 421 ສະຫາຍ ແລະ ອອກໃບອະນຸຍາດລາອອກໃຫ້ສະມາຊິກຊາວໜຸ່ມທີ່ພົ້ນອາຍຸກະສຽນໄດ້ 73 ສະຫາຍ, ຍິງ 24 ສະຫາຍ, ປັດຈຸບັນທົ່ວເມືອງມີໜ່ວຍຊາວໜຸ່ມທັງໝົດ 116 ໜ່ວຍ, ດຳເນີນກອງປະຊຸມໃຫຍ່ຂອງໜ່ວຍ ຄຊປປລ ສຳເລັດ 53 ໜ່ວຍ ທຽບໃສ່ແຜນການປີປະຕິບັດໄດ້ 45,68%, ຂະຫຍາຍສະມາຊິກຊາວໜຸ່ມ ປປ ລາວ ໄດ້ 412 ສະຫາຍ, ຍິງ 178 ສະຫາຍ ທຽບໃສ່ແຜນການປີປະຕິບັດໄດ້ລື່ນ 37%, ມີສະມາຊິກຊາວໜຸ່ມ ປປ ລາວ ທັງໝົດ 4.717 ສະຫາຍ, ຍິງ 1.583 ສະຫາຍ, ກອງອາສາສະໝັກຊາວໜຸ່ມຕະລຸມບອນ 3 ກອງ, ປັດຈຸບັນມີກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນທັງໝົດ 14 ໜ່ວຍ, ມີສະມາຊິກກອງທຶນທັງໝົດ 120 ສະຫາຍ, ຍິງ 56 ສະຫາຍ, ປະຕິບັດນະໂຍບາຍສະມາຊິກກອງທຶນທີ່ເຈັບເປັນ ແລະ ເກີດລູກໄດ້ຈຳນວນໜຶ່ງ, ຂະຫຍາຍສະມາຊິກເຍົາວະຊົນໄດ້ 455 ຄົນ, ຍິງ 271 ຄົນ ທຽບໃສ່ແຜນການປີປະຕິບັດໄດ້ລື່ນ 82%, ມີກອງເຍົາວະຊົນ 22 ກອງ, 65 ໝວດ ແລະ 251 ໝູ່, ມີເຍົາວະຊົນທັນວາທັງໝົດ 3.931 ຄົນ, ຍິງ 1.978 ຄົນ, ມີກອງເຍົາວະຊົນທັນວາ 3 ດີ 4 ຮູ້ ທັງໝົດ 5 ກອງ ທຽບໃສ່ແຜນປະຕິບັດໄດ້ 100%, ໄດ້ເຜີຍແຜ່ຄຳຂວັນ 3 ດີ 4 ຮູ້ 6 ຮັກ 3 ຊັງ ໄດ້ 20 ຄັ້ງ ທຽບໃສ່ແຜນການປີປະຕິບັດໄດ້ 100%, ໄດ້ສົມທົບອົງການກາແດງແຂວງຫຼວງພະບາງຊົນຂວາຍຊາວໜຸ່ມ-ໄວໜຸ່ມບໍລິຈາກເລືອດໄດ້ 55 ຖົງ.

ວຽກງານແມ່ຍິງເມືອງໄດ້ດຳເນີນກອງປະຊຸມໃຫຍ່ຂອງໜ່ວຍສະຫະພັນແມ່ຍິງຮາກຖານໄດ້ 4 ຮາກຖານ, ຂັ້ນໜ່ວຍໄດ້ 33 ໜ່ວຍ ແລະ ຮາກຖານບ້ານໄດ້ 5 ຮາກຖານ, ຂະຫຍາຍສະມາຊິກໄດ້ 329 ສະຫາຍ, ທຽບໃສ່ແຜນ ປະຕິບັດໄດ້ລື່ນແຜນ 73,15%, ອອກໃບຍົກຍ້າຍໃຫ້ສະມາຊິກສະຫະພັນແມ່ຍິງໄດ້ 223 ສະຫາຍ, ຕິດຕາມ, ກວດກາກຸ່ມທ້ອນເງິນຂອງເອື້ອຍນ້ອງແມ່ຍິງ ມີ 12 ບ້ານ, ມີສະມາຊິກກອງທຶນທັງໝົດ 907 ຄົນ, ມີເງິນທັງຫມົດ 4.758.013.000 ກີບ, ມອບໃບຍັ້ງຢືນ 3 ດີໃຫ້ຮາກຖານບ້ານ ແລະ ໜ່ວຍໄດ້ 126 ໃບ ແລະ ປະກາດເປັນເມືອງ ສະຫະພັນແມ່ຍິງ 3 ດີ ປະຈຳປີ 2022, ພ້ອມທັງລົງປະເມີນຄືນຂໍ້ແຂ່ງຂັນ 3 ດີໄດ້ 54 ຮາກຖານບ້ານ, ຮາກຖານໜ່ວຍໄດ້ 8 ຮາກຖານ ແລະ ໜ່ວຍໄດ້ 33 ໜ່ວຍ, ໂຄສະນາ, ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາທີ່ພົວພັນເຖິງສິດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍໄດ້ 25 ຄັ້ງ ມີຜູ້ເຂົ້າຮ່ວມ 1.782 ຄົນ, ລົງຝຶກອົບຮົມກຸ່ມເປົ້າໝາຍແມ່ຍິງອາຍຸຍັງນ້ອຍໄດ້ 5 ບ້ານ ແລະ ວຽກງານບົດບາດຍິງ-ຊາຍໄດ້ 5 ບ້ານ.

**ສຳລັບວຽກງານກຳມະບານ**: ໄດ້ເອົາໃຈໃສ່ໂຄສະນາສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານເປັນປົກກະຕິ, ສຳເລັດການເປີດກອງປະຊຸມຄົບຄະນະບໍລິຫານງານສະຫະພັນກຳມະບານເມືອງ ຄັ້ງທີ 5, ດຳເນີນກອງປະຊຸມໃຫຍ່ຮາກຖານກຳມະບານໄດ້ 25 ໜ່ວຍ ທຽບໃສແຜນ ປະຕິບັດໄດ້ 64,10%, ໄດ້ປະກາດສະຫະພັນກຳມະບານເມືອງ 5 ເປັນເຈົ້າ ປະຈຳປີ 2022, ຕິດຕາມສະພາບການອອກແຮງງານຂອງກຳມະກອນຊາວຜູ້ອອກແຮງງານຢູ່ຕາມທົ່ວໜ່ວຍແຮງງານເປັນປົກກະຕິ, ສົມທົບກັບຄະນະບ້ານ 5 ບ້ານເປົ້າໝາຍ ເພື່ອລົງໂຄສະນາເຜີຍແຜ່ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຈາກການນຳໃຊ້ທາດໄຍຫີນຂາວຂອງໂຮງງານກະເບື້ອງ, ໄດ້ເຂົ້າຮ່ວມກອງປະຊຸມຝຶກອົບຮົມການຂຶ້ນທະບຽນແຮງງານລາວ ແລະ ແຮງງານຕ່າງປະເທດທີ່ເມືອງນ້ຳບາກໄດ້ 1 ຄັ້ງ, ໃນໄລຍະ 1 ປີ ໄດ້ຮັບເງິນບຳລຸງຈາກສະມາຊິກກຳມະບານທັງໝົດ 32.215.000 ກີບ, ຮັບຈາກສະມາຊິກກອງທຶນ 90.550.000 ກີບ.

ວຽກງານນັກຮົບເກົ່າກໍໄດ້ນຳເອົາແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ລະບຽບກົດໝາຍຂອງລັດລົງເຊື່ອມຊຶມໃຫ້ພະນັກງານນັກຮົບເກົ່າເປັນປົກກະຕິ, ສຳເລັດກອງປະຊຸມຂັ້ນຈຸສະຫະພັນນັກຮົບເກົ່າໜ່ວຍຮາກຖານ ແລະ ກອງປະຊຸມໃຫຍ່ ຄັ້ງທີ V ຂອງໜ່ວຍສະຫະພັນນັກຮົບເກົ່າທົ່ວເມືອງ, ປັດຈຸບັນ, ທົ່ວເມືອງມີໜ່ວຍນັກຮົບເກົ່າຮາກຖານ 8 ໜ່ວຍ, ມີສະມາຊິກພັກນັກຮົບເກົ່າທັງໝົດ 613 ສະຫາຍ, ຍິງ 33 ສະຫາຍ, ໃນນີ້ມີສະມາຊິກກອງທຶນທັງໝົດ 244 ສະຫາຍ, ມີເງິນກອງທຶນທັງໝົດ 157.236.000 ກີບ, ມີຄອບຄົວຕົວແບບຂອງສະຫະພັນນັກຮົບເກົ່າ 6 ຄອບຄົວ ທຽບໃສ່ແຜນປະຕິບັດໄດ້ 100% ນີ້ແມ່ນຜົນງານສ່ວນໜຶ່ງໃນຕະຫຼອດປີ 2023 ຜ່ານມາ, ໃນການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມທີ່ຍາມໃດກໍຕັດສິນໃຈບຸກບືນຜ່ານຜ່າຄວາມຫຍຸ້ງຍາກ ເພື່ອຈັດຕັ້ງຜັນຂະຫຍາຍແນວທາງແຜນນະໂຍບາຍຂອງລັດ ແລະ ລັດ ຈຶ່ງເຮັດໃຫ້ເມືອງນ້ຳບາກ ແຂວງຫຼວງພະບາງ ມີສະຖຽນລະພາບດ້ານການເມືອງໜັກແໜ້ນ, ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ.



# ການຄວບຄຸມວັດຖຸເຊື້ອໄຟ ຫຼຸດຜ່ອນບໍ່ໃຫ້ໄຟໄໝ້ປ່າ

ຮຽບຮຽງໂດຍ: ວັນໄຊ ຕະວິນຍານ



ການຄວບຄຸມວັດຖຸເຊື້ອໄຟຫຼຸດຜ່ອນບໍ່ໃຫ້ໄຟໄໝ້ປ່າການປ້ອງກັນໄຟໄໝ້ປ່າດ້ວຍການຫຼຸດຜ່ອນວັດຖຸເຊື້ອໄຟ ໂດຍລວມແລ້ວແມ່ນມີຢູ່ 2 ວິທີຄື: ຫຼຸດຜ່ອນ ໂດຍການຈູດກ່ອນ. ໝາຍເຖິງຈູດວັດຖຸເຊື້ອໄຟກ່ອນລະດູການໄຟປ່າ (15-30% ຂອງເນື້ອທີ່ ປ່າ ຫຼືວັດຖຸເຊື້ອໄຟ) ສຳລັບເວລາຈູດແມ່ນເວລາ 6-8 ໂມງເຊົ້າ ແລະ ຕ້ອງກະກຽມກຳລັງໃຫ້ພຽງພໍໃນການຄວບຄຸມລວມທັງຕິດຕາມທິດທາງລົມ ແລະ ວັດຖຸເຊື້ອໄຟບໍ່ໃຫ້ແໜ້ນໜາເກີນໄປ (ຕາມຫຼັກການໜ້ອຍກວ່າ 5 ໂຕນຕໍ່ເຮັກຕາ).ນອກຈາກນັ້ນ, ຕ້ອງອະນາໄມເສດໄມ້ໃບຫຍ້າໃນລະດູກ່ອນການເກີດໄຟໄໝ້ປ່າ (ລະດູແລ້ງ) ໂດຍການເກັບ, ປັດກວາດ ຫຼື ໃຊ້ເຄມີ (ຢາຂ້າຫຍ້າ...) ນອກຈາກນັ້ນ, ຕ້ອງຈັດສັນພື້ນທີ່ທຳການຜະລິດ ຊຶ່ງເປັນວິທີປ້ອງກັນໄຟໄໝ້ປ່າໄດ້ດີອີກວິທີໜຶ່ງ ໂດຍສະເພາະພື້ນທີ່ຖາງປ່າເຮັດໄຮ່, ພື້ນທີ່ລ້ຽງສັດ (ທົ່ງຫຍ້າ), ພື້ນທີ່ສວນປູກໄມ້ອຸດສາຫະກຳ...ຈັດສັນພື້ນທີ່ປ່າຜະລິດ ຫຼື ເຂດຂຸດຄົ້ນໄມ້ ນອກຈາກນັ້ນ ຍັງຕ້ອງໄດ້ກຳນົດຂອບເຂດ, ໄລຍະເວລາໃນການໃຊ້ໄຟຂອງຊາວກະສິກອນອີກດ້ວຍ (ຄວບຄູ່ໄປກັບການກຳນົດພື້ນທີ່) ດ້ວຍການກຳຈັດວັດສະພືດ ຫຼື ເສດໄມ້ໃບຫຍ້າກ່ອນລະດູການໄຟປ່າມາເຖິງ ເພື່ອເປັນການຫຼຸດຜ່ອນວັດຖຸເຊື້ອໄຟ. ສຳຄັນອີກວິທີໜຶ່ງແມ່ນການຕັ້ງໜ່ວຍງານກວດກາລາດຕະເວນ ແລະ ລະບົບທໍ່ຍາມໄຟໄໝ້ປ່າຍ້ອນວ່າໃນວຽກງານປ້ອງກັນໄຟປ່າເປັນໜ້າວຽກໜຶ່ງທີ່ມີບົດບາດ ແລະ ສຳຄັນທີ່ສຸດແມ່ນການຈັດຕັ້ງໜ່ວຍງານກວດກາ ແລະ ລາດຕະເວນໄຟໄໝ້ປ່າກວດກາຈຸດທີ່ມີຄວາມສ່ຽງໃນການເກີດໄຟປ່າຫຼືພື້ນທີ່ຮັບຜິດຊອບ. ຈັດຕັ້ງລະບົບທໍ່ຄອຍຕິດຕາມການເກີດໄຟປ່າໃນຈຸດທີ່ມີຄວາມສ່ຽງໃນການເກີດໄຟໄໝ້ປ່າ ຫຼື ເຂດສວນປູກ, ປ່າທຳມະຊາດ ພ້ອມທັງຜະລິດປ້າຍເຕືອນໄພຕິດໄວ້ບ່ອນທີ່ມີຄວາມເໝາະສົມໂດຍທົ່ວໄປຈະມີ 5 ລະດັບ ຄື: 1). ບໍ່ມີຄວາມສ່ຽງ, 2). ປານກາງ, 3). ມີຄວາມສ່ຽງ, 4). ມີຄວາມສ່ຽງສູງ, 5). ອັນຕະລາຍ.

ທັງໝົດນີ້ແມ່ນວິທີການໃນການຄວມຄຸມເພື່ອບໍ່ໃຫ້ເກີດໄຟໄໝ້ລາມປ່າ.



# ສະຫວັນນະເຂດ ສ້າງຄູຝຶກວຽກງານອາກອນລາຍໄດ້ ແລະ ກວດກາໄລ່ລຽງອາກອນ

ກົມສ່ວຍສາອາກອນ ກະຊວງການເງິນໄດ້ເປີດຊຸດຝຶກອົບຮົມສ້າງຄູຝຶກວຽກງານອາກອນລາຍໄດ້ ແລະ ກວດກາໄລ່ລຽງອາກອນທີ່ແຂວງສະຫວັນນະເຂດຂຶ້ນເມື່ອບໍ່ດົນມານີ້ ທີ່ຫ້ອງປະຊຸມສ່ວຍສາອາກອນແຂວງ ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ສຸພັນ ວິລະວົງ ຮອງຫົວໜ້າກົມສ່ວຍສາອາກອນ, ມີສ່ວຍສາອາກອນນະຄອນຫຼວງວຽງຈັນ, ແຂວງບໍລິຄຳໄຊ, ຄຳມ່ວນ, ຈຳປາສັກ, ສະຫວັນນະເຂດ, ສາລະວັນ ແລະ ແຂວງອັດຕະປືເຂົ້າຮ່ວມ.




ທ່ານ ສຸພັນ ວິລະວົງ ໄດ້ກ່າວວ່າ: ການເປີດຊຸດອົບຮົມຄັ້ງນີ້ ເພື່ອສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂອງຂະແໜງສ່ວຍສາອາກອນ ເພື່ອໃຫ້ພະນັກງານມີຄວາມຮູ້, ຄວາມສາມາດທີ່ແນ່ນອນ ຊຶ່ງກະຊວງການເງິນກໍຄືກົມສ່ວຍສາອາກອນໄດ້ສຸມທຸກເຫື່ອແຮງ, ສະຕິປັນຍາລວມທັງດ້ານງົບປະມານເປັນຈຳນວນມະຫາສານ ເພື່ອພັດທະນາເຮັດໃຫ້ການຝຶກອົບຮົມມີປະສິດທິພາບປະສິດທິຜົນ. ໃນໄລຍະຜ່ານມາ ກົມສ່ວຍສາອາກອນໄດ້ສ້າງປຶ້ມຫຼັກສູດການຮຽນ-ການສອນໃນ 5 ວິຊາ ແລະ ໄດ້ຮັບຮອງຈາກລັດຖະມົນຕີກະຊວງການເງິນເປັນທີ່ຮຽບຮ້ອຍແລ້ວ ເຫັນວ່າປຶ້ມດັ່ງກ່າວຈະເປັນຄູ່ມືໃຫ້ແກ່ບັນດາທ່ານທີ່ມາຝຶກອົບຮົມໃນຄັ້ງນີ້ນຳໄປຄົ້ນຄວ້າໄດ້ດີພໍສົມຄວນ, ຫວັງວ່າປຶ້ມດັ່ງກ່າວຈະເປັນແນວທາງໃນການຈັດຕັ້ງປະຕິບັດບັນດາທິດສະດີຕ່າງໆ ໂດຍສະເພາະວຽກງານອາກອນລາຍໄດ້, ວຽກງານກວດກາໄລ່ລຽງອາກອນຖືເປັນໝາກຫົວໃຈຂອງຂະແໜງສ່ວຍສາອາກອນ.

ຊຸດອົບຮົມຄັ້ງນີ້, ຈະໄດ້ຮຽນຮູ້ດ້ານທິດສະດີ, ຫຼັກການ, ວິທີການ ແລະ ການປະຕິບັດຕົວຈິງ ເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມຊຳນານງານໃນການສ້າງຄູຝຶກໃຫ້ກາຍເປັນຊ່ຽວຊານສະເພາະດ້ານວຽກງານອາກອນລາຍໄດ້, ທັກສະການເປັນວິທະຍາກອນ (ຄູຝຶກ), ພາບລວມຄວາມຮູ້ພື້ນຖານວຽກງານສ່ວຍສາອາກອນ, ອາກອນລາຍໄດ້ຈຸນລະວິສາຫະກິດ, ດຳລັດວ່າດ້ວຍໃບເກັບເງິນ 297/ລບ ແລະ ວຽກງານລາຍຮັບບໍ່ແມ່ນພາສີ-ສ່ວຍສາອາກອນຂັ້ນເມືອງ; ຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດ 002/ປປທ, ຫຼັກສູດການຮຽນວິຊາກວດກາໄລ່ລຽງອາກອນ, ທັກສະການເປັນວິທະຍາກອນ (ຄູຝຶກ), ພາບລວມຄວາມຮູ້ພື້ນຖານວຽກງານສ່ວຍສາອາກອນ, ຄວາມຮູ້ພື້ນຖານກ່ຽວກັບການກວດກາໄລ່ລຽງອາກອນ, ລະບຽບການ ແລະ ຂັ້ນຕອນການກວດກາໄລ່ລຽງອາກອນແບບຄົບຊຸດ; ການວິໄຈຄວາມສ່ຽງ 16 ຕົວຊີ້ວັດ RBA, ພື້ນຖານບັນຊີວິສາຫະກິດ 2020 (ການກວດກາອາກອນຕາມໝວດບັນຊີ, ການກວດກາອາກອນຕາມຂະແໜງການເສດຖະກິດຄື: ການຄ້າ, ການຜະລິດ ແລະ ການບໍລິການ); ເຕັກນິກການສ້າງບົດບັນທຶກກວດກາໄລ່ລຽງອາກອນປະຈຳປີແບບຄົບຊຸດ, ການຮຽນ-ການສອນແມ່ນເປັນການບັນລະຍາຍແບບມີສ່ວນຮ່ວມ, ການອະທິບາຍ, ລົງເລິກເປັນແຕ່ລະກຳລະນີສຶກສາ, ການແລກປ່ຽນຄຳຄິດຄຳເຫັນ ລະຫວ່າງວິທະຍາກອນ ແລະ ນັກສຳມະນາກອນ. ຕອນທ້າຍໄດ້ມີການປະເມີນຄືນໃນແຕ່ລະຫົວຂໍ້ທີ່ໄດ້ຜ່ານການຝຶກອົບຮົມ ເພື່ອເປັນການທົດສອບທັກສະຂອງສຳມະນາກອນທີ່ຈະເປັນຄູຝຶກໃນແຕ່ລະຫົວຂໍ້. (ຂ່າວ: ສະຫວັນນະເຂດ)

# 1 ພຶດສະພາ ວັນແຫ່ງຄວາມພາກພູມໃຈຂອງຊົນຊັ້ນກຳມະກອນ

*ໂດຍ: ອິນທະໄຊ*



ວັນທີ 1 ພຶດສະພາ ເປັນວັນແຫ່ງຄວາມພາກພູມໃຈຂອງຊົນຊັ້ນກຳມະກອນລາວ ກໍຄືກຳມະກອນໃນທົ່ວໂລກ ໃນໂອກາດເຂົ້າຮ່ວມຂະບວນຍ່າງເພື່ອສຸຂະພາບ ເນື່ອງໃນໂອກາດວັນກຳມະກອນສາກົນ ຄົບຮອບ 138 ປີ (1 ພຶດສະພາ 1886-1 ພຶດສະພາ 2024) ທ່ານນາງ ລັດດາວອນ ວົງສາລີ ຫົວໜ້າໜ່ວຍງານປາຖະກະຖາ ຄະນະໂຄສະນາອົບຮົມເມືອງໄຊເສດຖາ ນະຄອນຫຼວງວຽງຈັນ (ນວ) ໄດ້ສະແດງຄວາມຮູ້ສຶກຕໍ່ນັກຂ່າວໜັງສືພິມປະຊາຊົນໃນວັນດັ່ງກ່າວທີ່ສວນປະຕູໄຊ ນວ ວ່າ: ຕົນເອງມີຄວາມພາກພູມໃຈ ແລະ ດີໃຈຫຼາຍຕໍ່ວັນດັ່ງກ່າວທີ່ໄດ້ໝູນວຽນມາອີກວາລະໜຶ່ງປີ ນີ້ຄົບຮອບ 138 ປີ. ທຸກໆປີເມື່ອຮອດວັນດັ່ງກ່າວຈະມີກິດຈະກຳຍ່າງເພື່ອສຸຂະພາບຢູ່ສະຖານທີ່ສວນປະຕູໄຊແຫ່ງນີ້ ໂດຍເລີ່ມຂະບວນຍ່າງຈາກສວນປະຕູໄຊໄປຕາມເສັ້ນທາງລ້ານຊ້າງ ຫາ ທັດຄຳ ແລ້ວກັບຄືນມາປະຕູໄຊບ່ອນເກົ່າ ໃນໄລຍະທາງ 2 ກິໂລແມັດ. ຕົນເອງກໍໄດ້ມາຮ່ວມກິດຈະກຳດັ່ງກ່າວນີ້ທຸກໆປີ, ເຫັນວ່າປີນີ້ມີມວນຊົນຊາວ ນວ ເຂົ້າມາຮ່ວມກິດຈະກຳດັ່ງກ່າວຢ່າງຫຼວງຫຼາຍ ເຮັດໃຫ້ມີບັນຍາກາດເບີກບານມ່ວນຊື່ນ, ຟົດຟື້ນເປັນພິເສດ ເຫັນໄດ້ວ່າເປັນໜຶ່ງກິດຈະກຳທີ່ມີຄວາມໝາຍ-ສຳຄັນຢ່າງຍິ່ງ ທັງເປັນປາງບຸນໃຫຍ່ສຳລັບຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານໃນທຸກຖ້ອນໜ້າ ກໍຄືໃນທົ່ວໂລກ ທັງເປັນວັນທີ່ຊົນຊັ້ນກຳມະກອນໄດ້ເຕົ້າໂຮມຄວາມສາມັກຄີກັນ ລຸກຮື້ຂຶ້ນຕໍ່ສູ້ຕ້ານການກົດຂີ່ຂູດຮີດ ເພື່ອທວງເອົາສິດທິພື້ນຖານຂອງຕົນ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຈາກພວກນາຍທຶນໂດຍເກີດມີຫຼາຍຂະບວນການຂອງກຳມະກອນໃນປະເທດຕ່າງໆ ລຸກຂຶ້ນຕໍ່ສູ້ຫຼາຍຂະບວນການ ຈຶ່ງປະກາດວັນທີ 1 ພຶດສະພາ 1886 ເປັນວັນກຳມະກອນສາກົນ ມາຮອດປັດຈຸບັນ.

ຢ່າງໃດກໍຕາມ ສຳລັບກິດຈະກຳໃນວັນດັ່ງກ່າວປີນີ້, ຖ້າທ່ານໃດບໍ່ໄດ້ໄປເຂົ້າຮ່ວມ ຫຼືປີນີ້ພາດໂອກາດ ປີໜ້າ ຫຼືປີຕໍ່ໆໄປກໍສາມາດມາໄດ້ ເພາະກິດຈະກຳດັ່ງກ່າວບໍ່ພຽງແຕ່ສະແດງໃຫ້ເຫັນຄວາມໝາຍ-ຄວາມສຳຄັນຂອງວັນດັ່ງກ່າວ ກິດຈະກຳໃນຄັ້ງນີ້, ຍັງເປັນການພົບປະກັບໝູ່ເພື່ອນ, ໄດ້ຄວາມສາມັກຄີຊຶ່ງກັນ ແລະ ກັນ, ໄດ້ສຸຂະພາບທີ່ດີ ແລະ ຍັງມີຄວາມເບີກບານມ່ວນຊື່ນ ແລະ ຄວາມປະທັບໃຈຕື່ມອີກ.

ທ່ານນາງ ລັດດາວອນ ວົງສາລີ ຍັງຝາກເຖິງກຳມະກອນ ກໍຄືຊາວຜູ້ອອກແຮງງານລາວ ຈົ່ງມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ ເຊື່ອໝັ້ນຕໍ່ການນຳພາຂອງພັກ, ສືບຕໍ່ປະກອບສ່ວນເຂົ້າໃນການປະຕິບັດແຜນພັດທະນາເສດຖະກິດຂອງຊາດ ສືບຕໍ່ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນກຳລັງແຮງງານທີ່ມີລະບຽບວິໄນໃນການອອກແຮງງານ ເສີມຂະຫຍາຍຄຸນລັກສະນະອັນດີເລີດທາດແທ້ ມູນເຊື້ອອັນດີງາມຂອງຊົນຊັ້ນກຳມະກອນລາວ ກາຍເປັນກຳລັງຫຼັກແຫຼ່ງໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ພ້ອມນັ້ນ, ໃນໂອກາດວັນກຳມະກອນສາກົນ ຄົບຮອບ 138 ປີທ່ານນາງ ລັດດາວອນ ວົງສາລີຍັງໄດ້ອວຍພອນໄຊອັນປະເສີດໃຫ້ຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານທຸກຖ້ອນໜ້າຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

# ພະແນກການເງິນແຂວງຄຳມ່ວນ ປະກາດພະນັກງານອອກພັກການ ຮັບອຸດໜູນບຳນານ



ພະແນກການເງິນແຂວງຄຳມ່ວນ ໄດ້ຈັດພິທີປະກາດພະນັກງານອອກພັກການ-ຮັບອຸດໜູນບຳນານຂຶ້ນໃນວັນທີ 3 ພຶດສະພາ ຜ່ານມານີ້ ທີ່ພະແນກດັ່ງກ່າວ ໂດຍມີທ່ານ ຄຳສິງ ໄຊສິດທິເດດ ຫົວໜ້າພະແນກການເງິນແຂວງ, ມີຕາງໜ້າຄະນະຈັດຕັ້ງແຂວງ, ພະແນກພາຍໃນແຂວງ, ບັນດາຂະແໜງການອ້ອມຂ້າງ ຕະຫຼອດເຖິງພະນັກງານຫຼັກແຫຼ່ງກ່ຽວຂ້ອງເຂົ້າຮ່ວມ.

ໂດຍປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 3263, 3264, 3265 ແລະ 0093, 0094 ວ່າດ້ວຍການອະນຸມັດໃຫ້ພະນັກງານ-ລັດຖະກອນອອກພັກການ-ຮັບອຸດໜູນບຳນານໃນງວດ I ປີ 2024 ໃນນີ້ປະກອບມີທ່ານທອງໄທ ຄຳວົງສາ ຮອງຫົວໜ້າພະແນກການເງິນແຂວງ, ທ່ານ ພູມີໄຊ ຜູຄຳຮິງ ຮອງຫົວໜ້າຂະແໜງຄັງເງິນປະຈຳແຂວງ ແລະ ທ່ານ ບຸນທະລົມ ໄຊປັນຍາ, ທ່ານນາງ ພູພັນສີ ແສງດາລາ, ທ່ານນາງ ບຸນຮວຍ ສີອິນທະວອນ ວິຊາການພະແນກການເງິນແຂວງ.

ໂອກາດນີ້, ທ່ານ ຄຳສິງ ໄຊສິດທິເດດ ໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍມາຍັງບັນດາທ່ານທີ່ໄດ້ຮັບນະໂຍບາຍອອກພັກການ-ຮັບອຸດໜູນບຳນານໃນຄັ້ງນີ້ ລ້ວນແຕ່ແມ່ນຜູ້ທີ່ມີຜົນງານອັນໃຫຍ່ຫຼວງປະກອບສ່ວນເສຍສະຫຼະທາງດ້ານເຫື່ອແຮງ, ສະຕິປັນຍາເຂົ້າໃນພາລະກິດປະຕິວັດຂອງພັກ ຊຶ່ງການຮັບນະໂຍບາຍໃນຄັ້ງນີ້ແມ່ນໄດ້ກຳນົດໄວ້ໃນແນວທາງຂອງພັກ, ກົດໝາຍຂອງລັດ ແມ່ນວຽກປົກກະຕິຢູ່ໃນແບບແຜນການນຳພາຂອງພັກເຮົາ. ພ້ອມນີ້ຍັງໄດ້ຮຽກຮ້ອງມາຍັງບັນດາທ່ານທີ່ໄດ້ຮັບນະໂຍບາຍພັກການ-ຮັບອຸດໜູນບຳນານຈົ່ງໄດ້ສືບຕໍ່ເປັນຫຼັກແຫຼ່ງແກ່ນສານ, ເປັນກຳລັງແຮງສຶກສາອົບຮົມພະນັກງານຫຼັກແຫຼ່ງເພື່ອໃຫ້ເຂົາເຈົ້າກາຍເປັນພະນັກງານສືບທອດປ່ຽນແທນໃນການປະກອບສ່ວນເຂົ້າໃນພາລະກິດສ້າງສາພັດທະນາປະເທດຊາດໃນໄລຍະໃໝ່ໃຫ້ດີຂຶ້ນເປັນກ້າວໆ.

(ຂ່າວ: ມະນີວັນ)

ສະຫາຍ ເພັດ...
(ຈາກໜ້າ...1)

ພ້ອມດ້ວຍບັນດາສະຫາຍຄະນະປະຈຳພັກ, ກຳມະການພັກ ແລະ ບັນດາສະຫາຍ ພະນັກງານຫຼັກແຫຼ່ງ ຂອງ ກຜທ ເຂົ້າຮ່ວມ.

ໃນພິທີ, ສະຫາຍ ວິສຸກ ພົມພິທັກ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ໄດ້ຂຶ້ນຜ່ານບັນດານິຕິກຳທີ່ກ່ຽວຂ້ອງ ຈາກນັ້ນ, ສະຫາຍ ຄຳເຈນ ວົງໂພສີ ໄດ້ມີບາງຄຳເຫັນ ເພື່ອລາຍງານສະພາບການປະຕິບັດໜ້າທີ່ວຽກງານຢູ່ ກຜທ ເປັນເວລາ 2 ປີກັບ 3 ເດືອນກວ່າຜ່ານມາ ໃຫ້ຮູ້ວ່າ: ຂ້າພະເຈົ້າມາຮັບໜ້າທີ່ແມ່ນໃນມື້ວັນທີ 4/2/2022 ຊຶ່ງເປັນຈຸດເວລາທີ່ທົ່ວພັກ, ທົ່ວປວງຊົນລາວທັງຊາດພວມກ້າວສູ່ປີທຳອິດແຫ່ງການຈັດຕັ້ງປະຕິບັດມະຕິ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX; ທັງສຸມໃສ່ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂເສດຖະກິດ-ການເງິນ ແລະບັນຫາຢາເສບຕິດທັງເປັນໄລຍະແຫ່ງການຟື້ນຟູຄືນການປະຕິບັດວຽກງານອັນປົກກະຕິທຸກພາກສ່ວນໃນທົ່ວປະເທດ, ພາຍຫຼັງມີການແຜ່ລະບາດຂອງພະຍາດໂຄວິດ-19, ແຕ່ກໍເປັນຈຸດເວລາທີ່ສະພາບການຂອງໂລກ ແລະ ພາກພື້ນສືບຕໍ່ຜັນແປຢ່າງສະຫຼັບສັບຊ້ອນ; ສຳລັບປະເທດພວກເຮົາ, ແມ່ນສືບຕໍ່ເຊື່ອມໂຍງກັບສາກົນເຂົ້າສູ່ລວງເລິກຫຼາຍຂຶ້ນ. ໃນສະພາບການດັ່ງກ່າວ, ຂ້າພະເຈົ້າພ້ອມກັບບັນດາສະຫາຍການນຳກໍຄືພະນັກງານ-ສະມາຊິກພັກ ໃນທົ່ວອົງຄະນະພັກກະຊວງ ໄດ້ພະຍາຍາມບຸກບືນສູ້ຊົນ ຜ່ານຜ່າທຸກຄວາມຫຍຸ້ງຍາກນາໆປະການ ເພື່ອປະຕິບັດໜ້າທີ່ທີ່ໄດ້ຮັບການມອບໝາຍດ້ວຍມາດຕະການຕ່າງໆ ອັນໄດ້ເຮັດໃຫ້ວຽກງານໃນທຸກດ້ານ ລວມທັງວຽກພັກ-ພະນັກງານ, ວຽກອົງການຈັດຕັ້ງມະຫາຊົນ ແລະ ວຽກງານວິຊາສະເພາະລ້ວນແຕ່ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີການຫັນປ່ຽນຢ່າງຕັ້ງໜ້າເປັນກ້າວໆ; ເປັນຕົ້ນຄື: ໄດ້ສຳເລັດການດຳເນີນກອງປະຊຸມຄົບຄະນະ ກາງສະໄໝຂອງຄະນະບໍລິຫານງານພັກກະຊວງ ຜທ ຄັ້ງທີ IV ໂດຍໄດ້ສະຫຼຸບ, ຕີລາຄາການຈັດຕັ້ງປະຕິບັດມະຕິ ຂອງອົງຄະນະພັກກະຊວງແຜນການ ແລະ ການລົງທຶນ ຄັ້ງທີ IV ກາງສະໄໝ (ປີ2021-2023) ແລະ ທິດທາງແຜນການທ້າຍສະໄໝ (ປີ2024-2025); ໄດ້ສຳເລັດການສ້າງແຜນການ ກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ໃນອົງຄະນະພັກ ກະຊວງ... ພ້ອມດຽວກັນ, ກໍໄດ້ລາຍງານໃຫ້ຮູ້ບາງດ້ານທີ່ຕ້ອງເອົາໃຈໃສ່ໃນຕໍ່ໜ້າ.

ໃນພິທີ, ສະຫາຍ ສອນໄຊ ສີພັນດອນ ກໍໄດ້ມີຄຳເຫັນວ່າ: ດ້ວຍຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ໃນໄລຍະໃໝ່, ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກໄດ້ຕົກລົງຈັດວາງ-ສັບຊ້ອນພະນັກງານການນຳຂັ້ນສູງບາງຕຳແໜ່ງຄືນໃໝ່, ການສັບຊ້ອນ, ສັບປ່ຽນໜ້າທີ່ຮັບຜິດຊອບຂອງພະນັກງານການນຳໃນລະບົບການຈັດຕັ້ງຂອງພັກ, ລັດ ແລະ ອົງການຈັດຕັ້ງມະຫາຊົນ ເປັນວຽກງານປົກກະຕິ ແລະ ແມ່ນຫຼັກການອັນໜຶ່ງໃນວຽກງານພະນັກງານຂອງພັກເຮົາ ຊຶ່ງດ້ານໜຶ່ງ ເພື່ອຍົກລະດັບປະສົບການຄວາມສາມາດ, ຄວາມຖະໜັດ ສະເພາະດ້ານຂອງພະນັກງານການນຳຂອງພວກເຮົາແຕ່ລະສະຫາຍ ທັງເປັນການກໍ່ສ້າງພະນັກງານການນຳພວກເຮົາ ໃຫ້ມີຄວາມຮູ້, ຄວາມສາມາດໃນວຽກງານຕົວຈິງຮອບດ້ານຫຼາຍຂຶ້ນ; ດ້ານໜຶ່ງອີກ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຕຳແໜ່ງງານ ກໍຄືສືບຕໍ່ຈັດຕັ້ງປະຕິບັດແນວທາງການເມືອງ ແລະ ຄາດໝາຍສູ້ຊົນ ທີ່ກອງປະຊຸມໃຫຍ່ຂອງພັກວາງອອກ. ກົມການເມືອງ, ຄະນະເລຂາທິການສູນກາງພັກ ຈຶ່ງໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ຕົກລົງເອກະພາບກັນຍົກຍ້າຍສະຫາຍ ຄຳເຈນ ວົງໂພສີ ໄປປະຈຳການຢູ່ບ່ອນໃໝ່ຢູ່ສຳນັກງານນາຍົກລັດຖະມົນຕີ.

ສະຫາຍ ສອນໄຊ ສີພັນດອນ ຍັງໄດ້ສະແດງຄວາມຊົມເຊີຍ ຕໍ່ສະຫາຍ ຄຳເຈນ ວົງໂພສີ ແລະ ບັນດາສະຫາຍໃນທົ່ວ ກຜທ ທີ່ຍາດໄດ້ຜົນສຳເລັດໃນໄລຍະຜ່ານມາ; ພ້ອມນີ້, ກໍສະແດງຄວາມເຊື່ອໝັ້ນວ່າ: ດ້ວຍຄວາມຮູ້ຄວາມສາມາດ ແລະ ປະສົບການທີ່ມີຂອງ ສະຫາຍ ຈະສືບຕໍ່ຮ່ວມແຮງ ຮ່ວມໃຈກັນພ້ອມກັບໝູ່ຄະນະຍູ້ແຮງຂະບວນການວຽກງານແຜນການ ແລະ ການລົງທຶນ, ວຽກງານສະຖິຕິແຫ່ງຊາດ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ເຂດເສດຖະກິດພິເສດໃນຂອບເຂດທົ່ວປະເທດທີ່ສະຫາຍ ຄຳເຈນ ວົງໂພສີ ພ້ອມໝູ່ຄະນະທີ່ເຄີຍໄດ້ນຳພາໃນໄລຍະຜ່ານມາແລ້ວນັ້ນ ໃຫ້ນັບມື້ຂະຫຍາຍຕົວດີຂຶ້ນກວ່າເກົ່າ.

ຊຽງຮ່ອນ ...
(ຈາກໜ້າ...1)

ທ່ານ ພິງສະຫວັນ ສິດທະວົງ ໄດ້ກ່າວວ່າ: ການແຕ່ງຕັ້ງໃນຄັ້ງນີ້ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນປັດຈຸບັນ ແລະ ຕໍ່ໜ້າ, ພ້ອມທັງໄດ້ເນັ້ນໜັກໃຫ້ຜູ້ທີ່ໄດ້ຮັບໜ້າທີ່ໃໝ່ຕ້ອງໄດ້ເອົາໃຈໃສ່ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງສູງຂຶ້ນກວ່າເກົ່າ ແລະ ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານທີ່ຖືກມອບໝາຍໃຫ້ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້. (ຂ່າວ: ຖວທ ຊຽງຮ່ອນ)

# ຂະບວນການສັກວັກຊີນກັນພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍທົ່ວປະເທດ

ກະຊວງສາທາລະນະສຸກແຫ່ງ ສປປ ລາວຮ່ວມກັບອົງການກາວີ (Gavi) ລັດຖະບານອົດສຕຣາລີ, ອົງການອຸຍນີເຊັບ ແລະ ອົງການອະນາໄມໂລກໄດ້ຈັດກອງປະຊຸມຖະແຫຼງຂ່າວກ່ຽວກັບການເປີດຂະບວນການຮັບວັກຊີນກັນພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍໃນທົ່ວປະເທດ ຂຶ້ນເມື່ອບໍ່ດົນມານີ້ ທີ່ໂຮງແຮມແລນມາກ ໂດຍມີທ່ານ ສະໜອງ ທອງຊະນະ ຮອງລັດຖະມົນຕີກະຊວງສາທາລະນະສຸກ; ທ່ານນາງ ນາເດຍ ລາສຣີ ຜູ້ຈັດການອາວຸໂສລະດັບປະເທດ ແລະ ຜູ້ປະສານງານສະໜັບສະໜູນຈາກອົງການກາວີ ປະຈຳ ສປປ ລາວ; ທ່ານ ແດນ ເຮວເດີນອຸປະທູດສະຖານທູດອົດສຕຣາລີ ພ້ອມດ້ວຍຜູ້ຕາງໜ້າ ອົງການອຸຍນີເຊັບ ປະຈຳ ສປປ ລາວ ແລະ ຂະແໜງການກ່ຽວຂ້ອງເຂົ້າຮ່ວມ.



ຂະບວນການສັກວັກຊີນກັນພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍທົ່ວປະເທດໃຫ້ກຸ່ມເດັກນ້ອຍອາຍຸຕໍ່າກວ່າ 5 ປີ ຊຶ່ງຂະບວນການດັ່ງກ່າວຈະໄດ້ຈັດຕັ້ງປະຕິບັດໃນໄລຍະຂອງສັບປະດາສັກຢາກັນພະຍາດສາກົນ (World Immunization Week) 2024 ແລະ ເນັ້ນໜັກໃຫ້ເຫັນເຖິງຄວາມສຳຄັນຂອງວັກຊີນໃນການຮັກສາຊີວິດຂອງເດັກນ້ອຍ. ຂະບວນການສັກວັກຊີນດັ່ງກ່າວຈະໄດ້ຈັດຕັ້ງປະຕິບັດໃນ ສປປ ລາວ ລະຫວ່າງວັນທີ 20-31 ພຶດສະພາ 2024 ໃນທົ່ວປະເທດ ໂດຍໄດ້ຮັບການສະໜັບສະໜູນຈາກອົງການກາວີ ລັດຖະບານອົດສຕຣາລີອົງການອຸຍນີເຊັບ ແລະ ອົງການອະນາໄມໂລກ ເພື່ອຊ່ວຍສະກັດ ກັ້ນການແຜ່ລະບາດຂອງພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍໃນ ສປປ ລາວ. ຂະບວນການໃຫ້ວັກຊີນນີ້ມີຄວາມສຳຄັນ ເນື່ອງຈາກວ່າປັດຈຸບັນໄດ້ມີການເພີ່ມຂຶ້ນຂອງກໍລະນີພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍໃນທົ່ວໂລກ ເນື່ອງຈາກມີອັດຕາການສັກຢາກັນພະຍາດຕໍ່າລົງໃນກຸ່ມເດັກນ້ອຍ.

ທ່ານ ສະໜອງ ທອງຊະນະ ກ່າວວ່າ: ການສັກວັກຊີນຮອບໃໝ່ນີ້ເກີດຂຶ້ນໃນໄລຍະສັບປະດາສັກຢາກັນພະຍາດສາກົນ 2024 ແລະ ຄາດວ່າຈະຊ່ວຍໃຫ້ການປ້ອງກັນແກ່ເດັກທີ່ມີອາຍຸຕໍ່າກວ່າ 5 ປີ ກວ່າເຄິ່ງລ້ານຄົນຈາກພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍ ຊຶ່ງວັກຊີນກັນພະຍາດດັ່ງກ່າວ ສາມາດສັກໄດ້ໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍໃດໆ. ການແຈກຢາຍວັກຊີນເຫຼົ່ານີ້ແມ່ນນຳພາໂດຍ ກະຊວງສາທາລະນະສຸກ, ວັກຊີນນີ້ສາມາດສັກໄດ້ໃນຂອບເຂດທົ່ວປະເທດ.

ທ່ານນາງ ນາເດຍ ລາສຣີ ກ່າວວ່າ: ການຄິດຄົ້ນວັກຊີນເປັນຜົນສຳເລັດອັນໂດດເດັ່ນໜຶ່ງໃນປະຫວັດສາດໂລກ ໃນຫຼາຍທົດສະວັດທີ່ຜ່ານມາ ເດັກນ້ອຍຫຼາຍຕື້ຄົນໄດ້ຮັບການປົກປ້ອງຈາກພະຍາດຕ່າງໆທີ່ເປັນໄພຂົ່ມຂູ່ຕໍ່ຊີວິດພວກເຂົານັ້ນກໍຄືວັກຊີນນັ້ນເອງ. ເຖິງຢ່າງໃດກໍຕາມ ການເພີ່ມຂຶ້ນຂອງກໍລະນີພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍ ໃນທົ່ວໂລກນັ້ນໄດ້ສະແດງໃຫ້ພວກເຮົາເຫັນແລ້ວວ່າ: ຍັງມີເດັກນ້ອຍຫຼາຍຄົນທີ່ຍັງບໍ່ໄດ້ຮັບວັກຊີນ ດັ່ງນັ້ນ ຂະບວນການໃຫ້ວັກຊີນ. ຄັ້ງນີ້ ຈະສາມາດເຂົ້າເຖິງເດັກທຸກຄົນໂດຍສະເພາະຜູ້ທີ່ຍັງບໍ່ໄດ້ຮັບວັກຊີນ ສະນັ້ນຕ້ອງສືບຕໍ່ລົງທຶນໃນວຽກງານນີ້ຕື່ມເພື່ອຮັບປະກັນວ່າບໍ່ໃຫ້ມີໃຜຖືກປະຖິ້ມໄວ້ເບື້ອງຫຼັງ ໂດຍສະເພາະກຸ່ມຄົນທີ່ມີຄວາມສ່ຽງ ແລະ ຢູ່ຫ່າງໄກສອກຫຼີກ.

ທ່ານ ແດນ ເຮວເດີນ ກ່າວວ່າ: ການສັກວັກຊີນເປັນວິທີທີ່ມີປະສິດທິພາບທີ່ສຸດໃນການປົກປ້ອງເດັກນ້ອຍຈາກພະຍາດຮ້າຍແຮງທີ່ສາມາດເກີດຂຶ້ນຈາກໝາກແດງໃຫຍ່ ແລະ ໝາກແດງນ້ອຍ ສາມາດຊ່ວຍໃຫ້ເດັກນ້ອຍມີສຸຂະພາບແຂງແຮງ ໄດ້ວັກຊີນກັນພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍ ທີ່ນຳໃຊ້ນັ້ນແມ່ນມີປະສິດທິຜົນ ແລະ ຖືກນຳໃຊ້ມາເປັນເວລາຫຼາຍທົດສະວັດແລ້ວໃນທົ່ວໂລກ. ດັ່ງນັ້ນຈຶ່ງເປັນສິ່ງສຳຄັນທີ່ເດັກນ້ອຍຕ້ອງໄດ້ຮັບວັກຊີນນີ້ຕາມເກນອາຍຸ.

ການເພີ່ມອັດຕາການສັກຢາກັນພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍໃນ ສປປ ລາວ ມີຄວາມສຳຄັນຫຼາຍຖ້າພວກເຮົາຢາກປ້ອງກັນການລະບາດຂອງພະຍາດໝາກແດງໃຫຍ່ ແລະ ໝາກແດງນ້ອຍທີ່ຮ້າຍແຮງ ຊຶ່ງຫຼາຍໆປະເທດກຳລັງປະເຊີນຢູ່. ສະນັ້ນລະຫວ່າງວັນທີ 20-31 ພຶດສະພານີ້ ຈະໄດ້ມີການລະດົມພະນັກງານ ແລະ ອາສາສະໝັກສາທາລະນະສຸກໃນຂອບເຂດທົ່ວປະເທດເພື່ອສະໜອງວັກຊີນທີ່ມີທັງຄວາມປອດໄພ ແລະ ປະສິດທິຜົນໃຫ້ເດັກນ້ອຍລາວທົ່ວປະເທດ . ວັກຊີນກັນພະຍາດທັງໝົດ ໃນ ສປປ ລາວແມ່ນໄດ້ຖືກຮັບຮອງໂດຍອົງການອະນາໄມໂລກ ແລະ ກະຊວງສາທາລະນະສຸກໄດ້ຮັບການຢັ້ງຢືນວ່າປອດໄພ ແລະ ມີປະສິດທິພາບສູງໃນການປ້ອງກັນເດັກນ້ອຍຈາກການເຈັບປ່ວຍຮ້າຍແຮງ ແລະ ການເສຍຊີວິດຈາກພະຍາດ ສະນັ້ນ, ລະຫວ່າງວັນທີ 20 ຫາ 31 ພຶດສະພານີ້ຈົ່ງພາລູກຫຼານຂອງທ່ານໄປຮັບວັກຊີນຕາມສຸກສາລາ, ໂຮງໝໍເມືອງ, ໂຮງໝໍແຂວງ ໂຮງໝໍໃຫຍ່ ຢູ່ນະຄອນຫຼວງວຽງຈັນ ແລະ ໜ່ວຍງານການບໍລິການເຄື່ອນທີ່.

(ຂ່າວ-ພາບ: ຍຸພິນທອງ)

## ກອງປະຊຸມລັດຖະບານຫວຽດນາມ ປະຈຳເດືອນເມສາ




ວິທະຍຸກະຈາຍສຽງຫວຽດນາມລາຍງານວ່າ: ໃນວັນທີ 4 ພຶດສະພາ ຜ່ານມາ ຢູ່ຮ່າໂນ້ຍ, ທ່ານ ຟ້າມມິງຈິ໋ງ ນາຍົກລັດຖະມົນຕີ ຫວຽດນາມ ໄດ້ເປັນປະທານກອງປະຊຸມລັດຖະບານປະຈຳເດືອນເມສາ. ກອງປະຊຸມເພື່ອແນໃສ່ປຶກສາຫາລືກ່ຽວກັບສະພາບການພັດທະນາເສດຖະກິດ - ສັງຄົມ ເດືອນ ເມສາ ແລະ 4 ເດືອນຕົ້ນປີ, ທິດທາງ, ໜ້າທີ່ຈຸດສຸມ ໃນເດືອນພຶດສະພາ ແລະ ໄລຍະຈະມາເຖິງ ພ້ອມກັບເນື້ອໃນສຳຄັນຈຳນວນໜຶ່ງຄືການປ່ອຍເງິນລົງທຶນສາທາລະນະ, 3 ໂຄງການເປົ້າໝາຍແຫ່ງຊາດ.

ຂ່າວລາຍງານວ່າ: ກ່າວຄຳເຫັນໃນກອງປະຊຸມ, ທ່ານ ຫງວຽນ ຈີຢຸງ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຫວຽດນາມ ໃຫ້ຮູ້ວ່າ: ສະພາບການເສດຖະກິດ - ສັງຄົມ ເດືອນເມສາ ສືບຕໍ່ຂະຫຍາຍຕົວທີ່ຕັ້ງໜ້າ, ດີກວ່າເດືອນມີນາ ແລະ 3 ເດືອນຕົ້ນປີ, ໄລ່ລວມ 4 ເດືອນຕົ້ນປີ 2024 ບັນລຸໄດ້ໝາກຜົນທີ່ດີຂຶ້ນເມື່ອທຽບໃສ່ໄລຍະດຽວກັນຂອງປີ 2023 ໃນບັນດາຂົງເຂດເກືອບທັງໝົດ. ໃນນັ້ນ, ເສດຖະກິດ ສືບຕໍ່ຮັກສາທ່າພັດທະນາຢ່າງຕັ້ງໜ້າ ຢູ່ 3 ຂົງເຂດກະສິກຳ, ອຸດສາຫະກຳ ແລະການບໍລິການ. ເສດຖະກິດມະຫາພາກ ມີສະຖຽນລະພາບ, ໄພເງິນເຟີ້ໄດ້ຮັບການຄວບຄຸມ, ຮັບປະກັນບັນດາຄວາມດຸ່ນດ່ຽງໃຫຍ່.

ໃນກອງປະຊຸມ, ທ່ານ ຟ້າມມິງຈິ໋ງ ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອແນໃສ່ຕີລາຄາສະພາບການເສດຖະກິດ - ສັງຄົມ ເດືອນເມສາ ແລະ 4 ເດືອນຜ່ານມາ, ຕີລາຄາບັນດາຈຸດສຸມ ຂອງວຽກງານຊີ້ນຳ, ບໍລິຫານ, ນຳພາ; ໄຈ້ແຍກ, ຕີລາຄາບັນດາໝາກຜົນທີ່ບັນລຸໄດ້, ຄວາມຫຍຸ້ງຍາກ, ຂໍ້ຕິດຂັດ, ບັນດາສາເຫດພາວະວິໄສ, ອັດຕະວິໄສ, ເປັນຕົ້ນແມ່ນການຊີ້ນຳ, ນຳພາ, ບໍລິຫານຕ້ອງໃສ່ໃຈ ເພື່ອຖອດຖອນບົດຮຽນປະສົບການ.

## ທ່ານ ສີຈິ້ນຜິງ ກ່າວຄຳປາໄສ ທີ່ສະໜາມບິນສາກົນອໍລີ ນະຄອນຫຼວງປາຣີ



ຂ່າວສານຊີອາໄອ ລາຍງານໃນວັນທີ 5 ພຶດສະພາຜ່ານມາ, ທ່ານ ສີຈິ້ນຜິງ ປະທານປະເທດຈີນ ເດີນທາງຮອດນະຄອນຫຼວງປາຣີ ປະເທດຝຣັ່ງ, ທ່ານໄດ້ກ່າວຄຳປາໄສຢູ່ສະໜາມບິນສາກົນອໍລີ ວ່າ: ໂດຍຕອບສະໜອງຕາມຄຳເຊີນຂອງ ທ່ານ ເອັມມານູເອວ ມາຄຣົງ ປະທານາທິບໍດີຝຣັ່ງ, ຂ້າ ພະເຈົ້າດີໃຈຫຼາຍທີ່ໄດ້ດຳເນີນການຢ້ຽມຢາມຝຣັ່ງ ທາງລັດຖະກິດ ຄັ້ງທີ 3. ໃນປີ 2014 ແລະ ປີ 2019, ຂ້າພະເຈົ້າເຄີຍຢ້ຽມຢາມຝຣັ່ງສອງເທື່ອໃນລະດູບານໃໝ່, ເພື່ອຮ່ວມກັບປະຊາຊົນຝຣັ່ງສະເຫຼີມສະຫຼອງຈີນ-ຝຣັ່ງສ້າງສາຍພົວພັນທາງການທູດ ຄົບຮອບ 50 ປີ ແລະ 55 ປີ. ເນື່ອງໃນໂອກາດຈີນ - ຝຣັ່ງສ້າງສາຍພົວພັນທາງການທູດ ຄົບຮອບ 60 ປີ, ຂ້າພະເຈົ້າໄດ້ເຂົ້າສູ່ດິນແດນຝຣັ່ງທີ່ສວຍງາມອີກເທື່ອໜຶ່ງ, ຮູ້ສຶກສະໜິດສະໜົມຫຼາຍ. ເນື່ອງໃນໂອກາດນີ້, ຂ້າພະເຈົ້າຂໍຕາງໜ້າລັດຖະບານ ແລະ ປະຊາຊົນຈີນ, ສົ່ງຄຳຢື້ຍາມຖາມຂ່າວທີ່ຈິງໃຈ ແລະ ຄຳອວຍພອນອັນປະເສີດໄປຍັງລັດຖະບານ ແລະ ປະຊາຊົນຝຣັ່ງ.

ໃນວາລະຢ້ຽມຢາມຝຣັ່ງຄັ້ງນີ້, ຂ້າພະເຈົ້າ ແລະ ທ່ານ ມາຄຣົງ ຈະແລກປ່ຽນຄວາມເຫັນຢ່າງເລິກເຊິ່ງກ່ຽວກັບການຂະຫຍາຍການພົວພັນລະຫວ່າງຈີນ-ຝຣັ່ງ, ຈີນ-ສະຫະພາບເອີຣົບ ພາຍໃຕ້ສະຖານະການໃໝ່ ພ້ອມດ້ວຍບັນຫາສາກົນ ແລະ ພາກພື້ນທີ່ສຳຄັນໃນປັດຈຸບັນ.

## OECD ຍົກລະດັບການຄາດຄະເນການເຕີບໂຕເສດຖະກິດທົ່ວໂລກ



ວິທະຍຸກະຈາຍສຽງຫວຽດນາມລາຍງານວ່າ: ເມື່ອບໍ່ດົນມານີ້, ອົງການຮ່ວມມື ແລະ ພັດທະນາເສດຖະກິດ (OECD) ໄດ້ຍົກລະດັບການຄາດຄະເນການເຕີບໂຕເສດຖະກິດທົ່ວໂລກ ໃນປີ 2024 ຂຶ້ນເປັນ 3,1%, ສູງກວ່າລະດັບ 2,9% ທີ່ໄດ້ຄາດຄະເນໃນເດືອນກຸມພາຜ່ານມາ.

ຂ່າວລະບຸວ່າ: OECD ໄດ້ຍົກລະດັບການເຕີບໂຕນີ້ ໂດຍອີງຕາມປັດໄຈຄວາມປະທັບໃຈ ແລະ ຄວາມລະມັດລະວັງຂອງພື້ນຖານເສດຖະກິດທົ່ວໂລກເລີ່ມກວມເອົາທ່າໄດ້ປຽບ ເຖິງຈະມີລະດັບເຕີບໂຕບໍ່ຫຼາຍປານໃດ ແລະ ຜົນກະທົບທີ່ແກ່ຍາວຂອງບັນດາຄວາມສ່ຽງດ້ານພູມິສາດການເມືອງ. ເຖິງຢ່າງໃດກໍຕາມ, OECD ໄດ້ເອົາໃສ່ໃຈກ່ຽວກັບການຟື້ນຟູທີ່ພວມດຳເນີນບໍ່ສະໝ່ຳສະເໝີລະຫວ່າງບັນດາພາກພື້ນ, ພ້ອມທັງຄາດຄະເນສະພາບການເສດຖະກິດມະຫາພາກສືບຕໍ່ປະເຊີນໜ້າກັບບັນດາການຜັນແປທີ່ກົງກັນຂ້າມກັນ, ດ້ວຍໄພເງິນເຟີ້ ແລະ ອັດຕາດອກເບ້ຍຫຼຸດລົງຢູ່ໃນລະດັບທີ່ແຕກຕ່າງກັນ ກໍຄືຄວາມຕ້ອງການໃນການປັບປຸງສະພາບການການເງິນທີ່ແຕກຕ່າງກັນ.

## ບັ້ນຮົບໄຊຊະນະດຽນບຽນຟູ

**(ເນື່ອງໃນໂອກາດວັນໄຊຊະນະດຽນບຽນຟູ ຄົບຮອບ 70 ປີ 7/5/1954 - 7/5/2024)**

*ຮຽບຮຽງໂດຍ: ວິໄລສັກ*



ກ່ອນໜ້ານີ້ 70 ປີ, ກອງທັບ ແລະ ປະຊາຊົນ ຫວຽດນາມ ໄດ້ຍາດເອົາໄຊຊະນະປະຫວັດສາດ ດຽນບຽນຟູ້. ໄຊຊະນະດັ່ງກ່າວ ໄດ້ນຳໄປສູ່ການລົງນາມໃນສັນຍາເຊີແນວກ່ຽວກັບການຢຸດຕິສົງຄາມ ແລະ ຟື້ນຟູສັນຕິພາບຢູ່ອິນດູຈີນ, ສ້າງປະຖົມປັດໄຈ ໃຫ້ປະຊາຊົນຫວຽດນາມ ທ້ອນໂຮມປະເທດຊາດເປັນເອກະພາບ ໃນປີ 1975.

70 ປີ, ພາຍຫຼັງໄຊຊະນະດຽນບຽນຟູ້, ປະຊາຊົນຫວຽດນາມ ແລະ ຝຣັ່ງ ໄດ້ຮ່ວມກັນສ້າງສາຍພົວພັນມິດຕະພາບ, ການຮ່ວມມື ແລະ ພັດທະນາ. ດຽນບຽນຟູ້ ແມ່ນບັ້ນຮົບໃຫຍ່ສຸດໃນສົງຄາມອິນດູຈີນ ຄັ້ງທີໜຶ່ງຊຶ່ງໄດ້ເກີດຂຶ້ນຢູ່ເໜືອງແທັງ ເມືອງດຽນບຽນ ແຂວງລາຍເຈົາ (ປັດຈຸບັນ ແມ່ນນະຄອນດຽນບຽນຟູ້ ແຂວງດຽນບຽນ).

**ບັ້ນຮົບ ດຽນບຽນຟູ້ ເປັນຂີດໝາຍ ແຫ່ງການປົດປ່ອຍຊາດ.**

ຕີລາຄາກ່ຽວກັບຄວາມໝາຍປະຫວັດສາດຂອງໄຊຊະນະດຽນບຽນຟູ້, ປະທານໂຮ່ຈີມິນ ໄດ້ເວົ້າວ່າ: ນີ້ແມ່ນຫຼັກໝາຍປະຫວັດສາດທີ່ຮຸ່ງເຮືອງເຫຼືອງເຫຼື້ອມ, ແມ່ນບົດກອນລຳອຳມະຕະຂອງສົງຄາມປະຊາຊົນ. ສ່ວນ ທ່ານ ພົນເອກຫວໍ ງວຽນຢາບ ຢັ້ງຢືນວ່າ: ຫວຽດນາມ ສາມາດເຮັດໄດ້ສິ່ງທີ່ຄິດວ່າເປັນເທບນິຍາຍ ແຕ່ພັດກາຍເປັນຄວາມຈິງ.

ດ້ວຍໄຊຊະນະດຽນບຽນຟູ້, ສັນຍາເຊີແນວ ວ່າດ້ວຍການຢຸດຕິສົງຄາມ, ຟື້ນຟູສັນຕິພາບຢູ່ອິນດູຈີນ, ລຶບລ້າງການປົກຄອງຂອງຝຣັ່ງ, ການຮັບຮູ້ເອກະລາດຂອງ 3 ຊາດອິນດູຈີນ ຫວຽດນາມ, ລາວ ແລະ ກຳປູເຈຍ ໄດ້ຮັບການລົງນາມ. ເຄິ່ງໜຶ່ງຂອງດິນແດນຫວຽດນາມ ໄດ້ຮັບການປົດປ່ອຍຢ່າງສົມບູນ, ເປີດໄລຍະປະຕິວັດໃໝ່, ກໍ່ສ້າງພາກເໜືອໃນ ສັນຕິພາບ, ຂ້າມຜ່ານກ້າວຂຶ້ນສູ່ສັງຄົມນິຍົມ, ເປັນແນວຫຼັງອັນໃຫຍ່ຫຼວງ ແລະ ໝັ້ນແກ່ນ ໃຫ້ພາລະກິດທ້ອນໂຮມປະເທດຊາດ ເປັນເອກະພາບ.

ໄຊຊະນະດຽນບຽນຟູ້ ບໍ່ພຽງແຕ່ສິ່ງຜົນສະທ້ອນ ຕໍ່ວິວັດທະນາການປະຫວັດສາດຂອງ ຫວຽດນາມ ເທົ່ານັ້ນ, ຫາກຍັງປະກອບສ່ວນເຂົ້າໃນການປ່ຽນແປງຂອງສະພາບການໂລກ, ເປີດຊ່ອງທາງໃຫ້ແກ່ຂະບວນການຍາດເອົາເອກະລາດ ແຫ່ງຊາດ ຂອງບັນດາປະເທດທີ່ເປັນທົ່ວເມືອງຂຶ້ນ. ທ່ານ ຄຣິສຕຽນ ຊີ ເລຊ (ມະຫາວິທະຍາໄລ North Carolina Chapel Hill, ອາເມຣິກາ) ກ່າວວ່າ: ບັ້ນຮົບດຽນບຽນຟູ້ ໄດ້ເຮັດໃຫ້ໂລກປ່ຽນແປງໄປ. ນັບແຕ່ປີ 1954- 1964, ມີ 17 ປະເທດ ໃນຈຳນວນ 22 ປະເທດ ທີ່ເປັນທົ່ວເມືອງຂຶ້ນຂອງຝຣັ່ງ ໄດ້ຮັບເອກະລາດ. ສະເພາະ ຢູ່ອາຟຣິກາ, ໃນປີ 1960 ມີ ເຖິງ 17 ປະເທດ ໄດ້ປະກາດເອກະລາດ.

**ໜ້າປະຫວັດສາດໃໝ່ໃນການພົວພັນຫວຽດນາມ - ຝຣັ່ງ**

19 ປີ ພາຍຫຼັງໄຊຊະນະດຽນບຽນຟູ້, ໃນວັນທີ 12 ເມສາ 1973 ຝຣັ່ງ ໄດ້ກາຍເປັນໜຶ່ງ ໃນບັນດາປະເທດເອີຣົບຕາເວັນຕົກ ທຳອິດທີ່ສ້າງຕັ້ງການພົວພັນທາງການທູດກັບຫວຽດນາມ. ນັບແຕ່ທ້າຍຊຸມປີ 80 ຂອງສະຕະວັດທີ 20, ຝຣັ່ງ ໄດ້ການຊ່ວຍເຫຼືອ ຫວຽດນາມ ດ້ານການເງິນ. ປີ 1993, ທ່ານ ຟຣານຄອຍສ ມິດເຕີເຣນ ແມ່ນປະທານາທິບໍດີຝຣັ່ງ ຄົນທຳອິດທີ່ເດີນທາງມາຢ້ຽມຢາມຫວຽດນາມ ຊຶ່ງເປັນຂີດໝາຍບາດກ້າວຫັນປ່ຽນທີ່ສຳຄັນໃນການພົວພັນກັບ ຫວຽດນາມ, ພິເສດແມ່ນບັນດາຍຸດທະສາດ ແລະ ນະໂຍບາຍທີ່ຝຣັ່ງ ປະຕິບັດຢູ່ອາຊີຕາເວັນອອກສ່ຽງໃຕ້ ແລະ ພາກພື້ນອາຊີ ປາຊີຟິກ.

ປີ 2013, ເນື່ອງໃນໂອກາດສະເຫຼີມສະຫຼອງ 40 ປີ ແຫ່ງວັນສ້າງຕັ້ງການພົວພັນທາງການທູດ, 2 ປະເທດ ໄດ້ລົງນາມໃນຖະແຫຼງການຮ່ວມກ່ຽວກັບການພົວພັນຄູ່ຮ່ວມມືຍຸດທະສາດຫວຽດນາມ - ຝຣັ່ງ. ໄລຍະທາງ 5 ທົດສະວັດຜ່ານມາ, ການພົວພັນລະຫວ່າງ ຫວຽດນາມ ແລະ ຝຣັ່ງ ນັບມື້ເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນ. ພິເສດແມ່ນໃນຂົງເຂດການຄ້າ, ດ້ວຍການຜັນຂະຫຍາຍສັນຍາການຄ້າເສລີ ຫວຽດນາມ - ສະຫະພາບເອີຣົບ (EVFTA), ວົງເງິນການຄ້າສອງຝ່າຍ ໄດ້ເຕີບໂຕຢ່າງຕໍ່ເນື່ອງ, ບັນລຸເກືອບ 8,5 ຕື້ໂດລາ ໃນປີ 2022. ປັດຈຸບັນ, ຝຣັ່ງ ແມ່ນຄູ່ຮ່ວມມືການຄ້າແຖວໜ້າຂອງ ຫວຽດນາມ ໃນສະຫະພາບເອີຣົບ.

ກ່ຽວກັບການຮ່ວມມືພັດທະນາ, ຝຣັ່ງ ແມ່ນຜູ້ອຸປະຖຳແຖວໜ້າຂອງເອີຣົບ ໃຫ້ ຫວຽດນາມ ແລະ ຫວຽດນາມ ແມ່ນອັນດັບທີ 2 ໃນບັນດາປະເທດໄດ້ຮັບທຶນຊ່ວຍເຫຼືອ (ODA) ຂອງຝຣັ່ງຢູ່ອາຊີດ້ວຍຈຳນວນທຶນ 18,4 ຕື້ໂດລາ (ນັບແຕ່ປີ 1993 ເປັນຕົ້ນມາ). ທ່ານ Benoit Guidle ຫົວໜ້າກົມອາຊີ-ອົສຕຣາລີ ກະຊວງການຕ່າງປະເທດ ຝຣັ່ງ ເນັ້ນວ່າ: ສິ່ງທີ່ສ້າງເປັນກຳລັງແຮງ ໃຫ້ການພົວພັນ ຫວຽດນາມ - ຝຣັ່ງ ແມ່ນເໜືອກວ່າທັງການເຈລະຈາດ້ານການເມືອງທີ່ມີຄຸນນະພາບ, ນັ້ນແມ່ນລະດັບຄວາມເຂັ້ມຂຸ້ນຂອງການພົວພັນດ້ານມະນຸດ. ເໜືອກວ່າທຸກປະເທດອື່ນໃນອາຊີ, ການພົວພັນລະຫວ່າງ ຝຣັ່ງ - ຫວຽດນາມ ໃນຂອບເຂດສະມາຄົມ, ວັດທະນະທຳ, ຊາວໜຸ່ມ, ນັກສຶກສາ ຫຼື ນັກຄົ້ນຄວ້າໃນທຸກຂົງເຂດ ນັບມື້ແຂງແຮງ. ນັບທັງຢູ່ໃນລະດັບສະມາຄົມມິດຕະພາບ ຫຼື ອຳນາດການປົກຄອງທ້ອງຖິ່ນ. ນັ້ນແມ່ນສິ່ງທີ່ສ້າງເປັນກຳລັງແຮງ ແກ່ການພົວພັນ ຫວຽດນາມ ແລະ ຝຣັ່ງ. ປັດຈຸບັນ, ຝຣັ່ງ ພວມຕັ້ງໜ້າຜັນຂະຫຍາຍນະໂຍບາຍທີ່ຂະຫຍັນຂັ່ນເຄື່ອນ ແລະ ຮອບດ້ານມຸ່ງໄປສູ່ພາກພື້ນ ອາຊີ - ປາຊີຟິກ. ໃນນັ້ນ, ຫວຽດນາມ ມີບົດບາດເປັນແກ່ນສານ.

ທ່ານ ດິງ ຕວານ ຖັງ ເອກອັກຄະລັດຖະທູດ ຫວຽດນາມ ປະຈຳ ຝຣັ່ງ ໃຫ້ຮູ້ວ່າ: ການພົວພັນ ຫວຽດນາມ - ຝຣັ່ງ ໄດ້ກ້າວເຂົ້າສູ່ໄລຍະຮ່ວມມືໃໝ່ ພາຍຫຼັງ 50 ປີ ແຫ່ງການສ້າງຕັ້ງການພົວພັນທາງການທູດ. ພວກເຮົາມີຄວາມຜູກພັນ ແລະ ໄດ້ຮັບການສະໜັບສະໜູນອັນໃຫຍ່ຫຼວງ ຈາກປະຊາຊົນສອງປະເທດ. ພ້ອມທັງມີການແບ່ງປັນລະຫວ່າງການນຳ 2 ປະເທດ ກ່ຽວກັບວິໄສທັດຂອງການພົວພັນສອງຝ່າຍ ໃນໄລຍະຈະມາເຖິງ ດ້ວຍບັນດາເສົາຄ້ຳສຳຄັນ, ບຸລິມະສິດ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນປັດຈຸບັນ.

70 ປີ, ໄດ້ຜ່ານໄປ ນັບແຕ່ວັນທຸງຊາດຂອງກອງທັບຫວຽດນາມ ປິວສະບັດ ຢູ່ເທິງຊຸມຫຼົບໄພ ຂອງນາຍພົນ De Castries. ປັດຈຸບັນ, ປະຊາຊົນສອງປະເທດ ຫວຽດນາມ ແລະ ຝຣັ່ງພວມພ້ອມກັນພັດທະນາ, ມຸ່ງໄປເຖິງບັນດາຫຼັກໝາຍໃໝ່ໃນການພົວພັນ 2 ຝ່າຍ.

## ປີ 2023 ຍອດການລົງທຶນ FDI ໃນສິງກະໂປເພີ່ມຂຶ້ນ 10%



ຂ່າວຕ່າງປະເທດລາຍງານໃນທ້າຍອາທິດຜ່ານມາ, ຫ້ອງການສະຖິຕິຂອງສິງກະໂປ ລາຍງານວ່າ: ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ຂອງສິງກະໂປ ໃນປີ 2023 ມີ 214 ຕື້ໂດລາສິງກະໂປ ເພີ່ມຂຶ້ນ 10% ຈາກປີກ່ອນໜ້າ.

ຫ້ອງການດັ່ງກ່າວ ຍັງລະບຸວ່າ: ການເຕີບໂຕຂອງການລົງທຶນໂດຍກົງຈາກຕ່າງປະເທດ ເປັນຜົນມາຈາກການເພີ່ມຂຶ້ນຂອງເງິນລົງທຶນໃນທຶນຮຸ້ນ ແລະ ກຳໄລສະສົມ ໂດຍ ສະຫະລັດ ອາເມຣິກາ, ໂຮນລັງ, ຈີນ, ຍີ່ປຸ່ນ ແລະ ເຂດບໍລິຫານພິເສດຮົງກົງ ຖືເປັນແຫຼ່ງການລົງທຶນໂດຍກົງຈາກຕ່າງປະເທດທີ່ສຳຄັນຂອງສິງກະໂປໃນປີ 2023 ຄິດເປັນ 64% ຂອງກະແສການລົງທຶນໂດຍກົງຂາເຂົ້າທັງໝົດ.

ບົດລາຍງານລະບຸຕື່ມວ່າ: ການບໍລິການທາງການເງິນ ແລະ ການປະກັນໄພ ມີອັດຕາສ່ວນຫຼາຍກວ່າເຄິ່ງໜຶ່ງຂອງກະແສການລົງທຶນໂດຍກົງຈາກຕ່າງປະເທດທັງໝົດຂອງສິງກະໂປໃນປີ 2023.

## ຫຼາຍພາກສ່ວນສະໜັບສະໜູນ ງານມະຫະກຳກິລາ ມະຫາວິທະຍາໄລລາວ ເກມ 2024 ຄັ້ງທີ II




ພິທີມອບ-ຮັບການສະໜັບສະໜູນງານມະຫະກຳກິລາ ມະຫາວິທະຍາໄລລາວ ເກມ 2024 ຄັ້ງທີ II ຫຼື ກມລ 2 ຈະຈັດຂຶ້ນລະຫວ່າງວັນທີ 5-14 ພຶດສະພານີ້ ຊຶ່ງມີຫຼາຍພາກສ່ວນ ລວມມູນຄ່າ 1.505.242.400 ກີບ ໃນນີ້ສະເພາະ ບໍລິສັດ ເບຍລາວ ຈຳກັດ ອຸປະຖຳ ລວມມູນຄ່າ 900 ລ້ານກີບ ເມື່ອບໍ່ດົນມານີ້ ທີ່ສະຖາບັນຂົງຈື່ ວິທະຍາເຂດດົງໂດກ ຕາງໜ້າມອບໂດຍທ່ານ ຈັນສະໝອນ ຜ່ອງຈັນທາ ຜູ້ອຳນວຍການຝ່າຍການຕະຫຼາດ ບໍລິສັດ ເບຍລາວ ຈຳກັດ ແລະ ຕາງໜ້າກ່າວຮັບແມ່ນທ່ານ ອຸດົມ ພອນຄຳເພັງ ປະທານສະຫະພັນກິລາມະຫາວິທະຍາໄລລາວທັງເປັນປະທານຈັດງານກິລາ ກມລ 2 ໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານໂດຍທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ. ຮອງປະທານຄະນະກຳມະການໂອແລັມປິກແຫ່ງຊາດລາວ ທັງເປັນຜູ້ຊີ້ນຳການຈັດງານກິລາ ກມລ 2.

ສຳລັບບັນດາພາກສ່ວນທີ່ໃຫ້ການສະໜັບສະໜູນ ປະກອບມີບໍລິສັດເບຍລາວຈຳກັດໃຫ້ການສະໜັບສະໜູນ 900 ລ້ານກີບ. ໃນນັ້ນ, ເປັນເງິນສົດ 100 ລ້ານກີບ, ຜະລິດຕະພັນຕ່າງໆ ໂດຍສະເພາະເຄື່ອງດື່ມລວມມູນຄ່າ 663 ລ້ານກີບ ແລະ ປ້າຍຕ່າງໆ 137 ລ້ານກີບ, ມະຫາວິທະຍາໄລຊິນເຜົ່າກວາງຊີ 300 ລ້ານກີບ ແລະ ບໍລິສັດ ບູນກຣາດ ດີຊາຍກຸຣຸບ ຈຳກັດຜູ້ດຽວ 150 ລ້ານກວ່າກີບ.




ນອກຈາກນັ້ນ, ກໍຍັງມີສະພາການຄ້າກວາງຊີປະຈຳສປປລາວ 30 ລ້ານກີບ, ບໍລິສັດ ດັບເບີນຢູ ດັບເບີນຢູ, ບໍລິສັດ ແມ່ຂອງ ຈຳກັດ ແລະ ບໍລິສັດ ແສງເພັດ ກໍ່ສ້າງຂົວທາງ ຈຳກັດຜູ້ດຽວພາກສ່ວນລະ 20 ລ້ານກີບ, ບໍລິສັດ ຢຸນລຸນ ກໍ່ສ້າງຂົວທາງຈຳກັດຜູ້ດຽວ, ບໍລິສັດ ແກ້ວປະເສີດ ການລົງທຶນ ຈຳກັດຜູ້ດຽວ, ບໍລິສັດ ເດີບິວເດີ ສຳຫຼວດ-ອອກແບບ, ກໍ່ສ້າງ ແລະ ທີ່ປຶກສາຈຳກັດ ແລະ ບໍລິສັດ ວີໂອລາວ ພາກສ່ວນລະ 10 ລ້ານກີບ.

ຮ້ານຈຳໜ່າຍອຸປະກອນການສຶກສາ ເອດີເອັດ, ທ່ານຢາງກົງຊຽງ ນັກສຶກສາປະລິນຍາໂທ ຄະນະອັກສອນສາດ ມຊ, ບໍລິສັດ ເຄພີ ກໍ່ສ້າງ ຈຳກັດຜູ້ດຽວ ແລະ ບໍລິສັດ ວີເອັນວີ ກໍ່ສ້າງ ຈຳກັດຜູ້ດຽວ ພາກສ່ວນລະ 5 ລ້ານກີບ, ບໍລິສັດ ໂຮງງານເພັດປະກາຍຕັດຫຍິບປັກແສ່ວ ແລະ ພິມ 3 ລ້ານກີບ ແລະ ບໍລິສັດ ເອັກພີການຄ້າຄົບວົງຈອນ ຈຳກັດຜູ້ດຽວ 2 ລ້ານກີບ ລວມມູນຄ່າໃນການສະໜັບສະໜູນເປັນເງິນສົດ 555 ລ້ານກີບ ແລະ ລວມມູນຄ່າທັງໝົດ 1.505.242.400 ກີບ.

(ພາບ-ຂ່າວ: ສົງການ ພັນແພງດີ)

## ວປກ ເອົາຊະນະ ມຊ ເຈົ້າພາບ 2-0 ຄູ່ ໄດ້ຫຼຽນຄຳກະຕໍ້ ທີມຊຸດ ຄູ່ຊາຍ



ທີມນັກກິລາກະຕໍ້ວິທະຍາຄານປ້ອງກັນຊາດ (ວປກ) ສ້າງຜົນງານໄດ້ຢ່າງໂດດເດັ່ນທັງໃນຮອບຊີງຊະນະເລີດ ຫຼື ຮອບຊີງຫຼຽນຄຳ ສາມາດເອົາຊະນະທີມມະຫາວິທະຍາໄລແຫ່ງຊາດ (ມຊ) ເຈົ້າພາບ ໄປໄດ້ 2-0 ຄູ່ ໄດ້ຫຼຽນຄຳ ໄປຄອງ ແລະ ເປັນຫຼຽນຄຳທຳອິດຂອງງານມະຫາກຳກິລາມະຫາວິທະຍາໄລລາວ ຄັ້ງທີ II ອີກດ້ວຍ.

ການແຂ່ງຂັນຄູ່ຊີງຫຼຽນຄຳລະຫວ່າງວິທະຍາຄານປ້ອງກັນຊາດ ພົບກັບ ມະຫາວິທະຍາໄລແຫ່ງຊາດ ໄດ້ມີຂຶ້ນໃນບ່າຍວັນທີ 4 ພຶດສະພາ ຜ່ານມາ ທີ່ສະໜາມກິລາໃນຮົ່ມໂອແລັມປາເຊຍ ວິທະຍາເຂດດົງໂດກ ນະຄອນຫຼວງວຽງຈັນ ຊຶ່ງລະບົບການແຂ່ງຂັນແມ່ນຊະນະ 2 ໃນ 1 ເກມ ໄດ້ຫຼຽນຄຳໄປຄອງ. ຜ່ານການແຂ່ງຂັນຄູ່ຊີງຊະນະເລີດຜົນປະກົດວ່າທີມນັກກິລາກະຕໍ້ ວປກ ສາມາດ ເອົາຊະນະທີມກະຕໍ້ ມຊ ເຈົ້າພາບ 2-0 ຄູ່ ໄດ້ຫຼຽນຄຳ ໄປຄອງ ແລະ ເປັນຫຼຽນຄຳທຳອິດຂອງງານມະຫາກຳກິລາມະຫາວິທະຍາໄລລາວ ຄັ້ງທີ II ອີກດ້ວຍ. ສ່ວນຫຼຽນເງິນ ຕົກເປັນຂອງ ມຊ ເຈົ້າພາບ ແລະ ຫຼຽນທອງຮ່ວມ ໄດ້ແກ່ ສະຖາບັນຍຸຕິທຳແຫ່ງຊາດ ແລະ ມະຫາວິທະຍາໄລສະຫວັນນະເຂດ.

ເປັນກຽດເຂົ້າຮ່ວມ ແລະ ມອບຫຼຽນລາງວັນຂອງ ທ່ານ ອຸດົມ ພອນຄຳເພັງ ປະທານສະຫະພັນກິລາມະຫາວິທະຍາໄລລາວທັງເປັນປະທານຈັດງານມະຫາກຳກິລາມະຫາວິທະຍາໄລລາວ ຄັ້ງທີ II , ທ່ານ ພົນຈັດຕະວາ ສົມພອນ ສີສຸວັນນະ ຮອງຜູ້ອຳນວຍການວິທະຍາຄານປ້ອງກັນຊາດ ແລະ ທ່ານ ຄຳສີ ຄຳພັນທອງ ຄະນະກຳມະການຈັດການແຂ່ງຂັນກິລາກະຕໍ້ ງານມະຫາກຳກິລາມະຫາວິທະຍາໄລລາວຄັ້ງທີ II, ມີຄະນະນຳ, ຄູຝຶກ ແລະ ນັກກິລາ ຕະຫຼອດຮອດພາກສ່ວນກ່ຽວຂ້ອງຢ່າງພ້ອມພຽງ.

(ຂ່າວ: ລູກນ້ຳເຊ ອິນທະດາລິນ)






ຜູ້ຊີ້ນຳ
ທ່ານ ວັນໄຊ ຕະວິນຍານ ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ
ຫົວໜ້າບັນນາທິການໃຫຍ່ໜັງສືພິມປະຊາຊົນ (020) 55668332

ຮອງຫົວໜ້າບັນນາທິການໃຫຍ່
ທ່ານ ສີວັນ ທອນໄຊຍະເດດ (020) 55413454

ຫົວໜ້າພະແນກບັນນາທິການຂ່າວການເມືອງ- ເສດຖະກິດ
ທ່ານ ຄຳເຮືອງ ຄຳປະສິດ (020) 56431159
(021) 336119

ຫົວໜ້າພະແນກບັນນາທິການຂ່າວວັດທະນະທຳ - ສັງຄົມ
ທ່ານ ຕຸໄລເພັດ ພົມເມືອງ (020) 22240119
(021) 336118

ຮັກສາການຫົວໜ້າພະແນກບັນນາທິການຂ່າວຕ່າງປະເທດ ແລະ ໜັງສືພິມ ເອເລັກໂຕຣນິກ
ທ່ານນາງ ຈັນທະລາ ໄຊຍະເຫຼັກ (020) 55658399

ຫົວໜ້າພະແນກ ເຕັກນິກ - ຈັດໜ້າ ແລະ ກວດແກ້
ທ່ານນາງ ທອງດາ ລິດອຸທຸມ (020) 52233864

ຫົວໜ້າພະແນກຄຸ້ມຄອງ ໂຄສະນາ ແລະ ຈຳໜ່າຍ
ທ່ານ ນາງ ມາລາຄອນ ອູບຄຳ
(021) 336111 Fax: (021) 336112